# ປື້ມຄູ່ມື ຝຶກອົບຮົມຜູ້ນໍາພາກິດຈະກໍາເພື່ອນສອນເພື່ອນ
# ຊຸດກິດຈະກໍາທັກສະຊີວິດຂັ້ນພື້ນຖານ

ວິທີການຈັດຕັ້ງປະຕິບັດວຽກງານໂພຊະນາການ
ຢູ່ໂຮງຮຽນມັດທະຍົມຕອນຕົ້ນແກ່ກຸ່ມໄວໜຸ່ມ

## ໂມດູນ 2: ບົດບາດຍິງ-ຊາຍ, ຄວາມສະເໝີພາບ ແລະ ການປ່ຽນແປງຂອງໄວໜຸ່ມ



ໂຄງການຮ່ວມມືປັບປຸງດ້ານໂພຊະນາການ

Save the Children
CARE
ສະຫະພາບ ເອີຣົບ European Union
CCL
ChildFund Laos

## ພາກສະເໜີ

ໃນເບື້ອງຕົ້ນ ພວກເຮົາຕ້ອງການບັນທຶກຈິດຈຳຄວາມກະຕັນຍູຮູ້ບຸນຄຸນຂອງພວກເຮົາມາຍັງເຈົ້າໜ້າທີ່ທາງການຂັ້ນແຂວງ ແລະ ຂັ້ນເມືອງຂອງກະຊວງສາທາລະນະສຸກ **MOH** ແລະ ກະຊວງສຶກສາທິການ ແລະ ກິລາ **MOSE** ສຳລັບການຊີ້ນຳ ແລະ ຊຸກຍູ້ສົ່ງເສີມການກຳນົດປຶ້ມຄູ່ມືການຝຶກອົບຮົມການຈັດກິດຈະກຳເພື່ອນສອນເພື່ອນເຫຼັ້ມນີ້ ແລະ ສະໜອງອຸປະກອນການຝຶກອົບຮົມສຳລັບໂຮງຮຽນມັດທະຍົມຕອນຕົ້ນ **LSS**

ໃນເບື້ອງຕົ້ນຂອງການກຳນົດໂຄງການ, ຄູ່ຮ່ວມງານຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການ ແລະ ຄູ່ຮ່ວມງານຂອງລັດຖະບານ, ບັນດາກຸ່ມຄູ່ຮ່ວມງານໄດ້ເຫັນດີເປັນເອກະພາບກັນວ່າ ພວກເຮົາຄົງຈະບໍ່ສາມາດອອກແບບລາຍການ ແລະ ອຸປະກອນໃໝ່ໄດ້ຢ່າງຄົບຖ້ວນ ແລະ ສົມບູນ ແຕ່ຈະໄດ້ກໍ່ສ້າງ ແລະ ປັບປຸງລາຍການຕ່າງໆທີ່ລັດຖະບານພ້ອມດ້ວຍຄູ່ຮ່ວມງານພັດທະນາວຽກງານດ້ານໂພຊະນາການທີ່ມີຢູ່ແລ້ວ. ການຄົ້ນຄວ້າຢ່າງກວ້າງຂວາງໄດ້ຈັດຕັ້ງຂຶ້ນເພື່ອສຳຫຼວດ, ອອກແບບ ແລະ ທົບທວນບັນດາອຸປະກອນການຝຶກອົບຮົມທີ່ມີຢູ່ແລ້ວໃນໄລຍະຜ່ານມາທີ່ໄດ້ຮັບການພັດທະນາໂດຍລັດຖະບານ ແລະ ຄູ່ຮ່ວມງານອື່ນໆຂອງລັດຖະບານ ສ ປປ ລາວ ເພື່ອໃຫ້ທຽມທັນກັບບັດດາປະເທດເພື່ອນບ້ານ. ພວກເຮົາໄດ້ນຳມາເຊິ່ງອຸປະກອນທີ່ດີເລີດສອງສາມລາຍການ ແລະ ພາຍຫຼັງທີ່ມີການທົບທວນໃນໄລຍະສຳຄັນດັ່ງກ່າວຈຶ່ງໄດ້ຕັດສິນໃຈຫັນມານຳໃຊ້ອຸປະກອນທີ່ນຳມາຈາກຫຼາຍແຫຼ່ງທີ່ແຕກຕ່າງກັນ.

1. ວິງມົນແຫ່ງມິດຕະພາບຈາກ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI**
2. ບົດບາດ ຍິງ-ຊາຍ ຈາກ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI** ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ **CARE**
3. ວິດີໂອກ່ຽວກັບວຽກງານດ້ານໂພຊະນາການທີ່ກເລື່ອງຈາກ ຊຸມຊົນຊື່ນໃຈ 'ຊຸດຄວາມສຸກຂອງຄອບຄົວ' ເປັນຄູ່ຮ່ວມງານກັບອົງການອາຫານໂລກ **WFP**, ອົງການ ອີຟັດ **IFAD** ແລະ ຄູ່ມືການຮຽນ-ການສອນຂອງຄູ ແລະ ປຶ້ມແບບຮຽນໂພຊະນາການສຳລັບນັກຮຽນຈາກອົງການກາແດງສະວິດສ ແລະ ອົງການກາແດງລາວ.
4. ຫຼັກສູດສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ປຶ້ມຄູ່ມືສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ **SRH** ຈາກ ສະຫະປະຊາຊາດ ກອງທຶນເພື່ອປະຊາກອນ **UNFPA**, ຊີເອສອີ **CSE** ແລະ ອົງການສາກົນ ບໍລິການປະຊາຊົນ **PSI Laos** "ຮັກມີແຜນ"

ພວກເຮົາໄດ້ດັດແກ້ເລັກນ້ອຍເພື່ອໃຫ້ເຂົ້າກັບສະພາບ, ເປົ້າໝາຍ ແລະ ໄລຍະເວລາຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການ.

ກິດຈະກຳ ແລະ ອຸປະກອນຕ່າງໆຈະໄດ້ນຳໄປທົດສອບຢູ່ໃນພາກສະໜາມ ກ່ອນທີ່ຈະສັງລວມລົງໃນປຶ້ມຄູ່ມືການຝຶກອົບຮົມບົດຮຽນເຫຼັ້ມນີ້.

ໃນນີ້ ພວກເຮົາຕ້ອງການຮັບຮອງເອົາການສະໜັບສະໜູນຈາກອົງການກາແດງສະວິດສ ແລະ ອົງການກາແດງລາວ. ອົງການອາຫານໂລກ **WFP**, ອົງການ ອີຟັດ **IFAD**, ສະຫະປະຊາຊາດ ກອງທຶນເພື່ອປະຊາກອນ **UNFPA**, ອົງການສາກົນ ບໍລິການປະຊາຊົນ **PSI Laos** ແລະ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ

**SCI -** ທີມງານປົກປ້ອງເດັກທີ່ອະນຸຍາດໃຫ້ພວກເຮົານຳໃຊ້ສື່ອຸປະກອນການຝຶກອົບຮົມວິທີການສຳລັບໂຮງຮຽນມັດທະຍົມຕອນຕົ້ນຂອງໂຄງການການຮ່ວມມືປັບປຸງດ້ານໂພຊະນາການ.

ພວກເຮົາຈຶ່ງຖືໂອກາດນີ້ສະແດງຄວາມຮູ້ບູນຄຸນມາຍັງຄູ່ຮ່ວມງານຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການທຸກທ່ີວໜ້າເປັນຕົ້ນແມ່ນອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ **CARE,** ອົງການຮ່ວມມືກັບປະເທດລາວ **CCL** ແລະ ກອງທຶນຊ່ວຍເຫຼືອເດັກ ແລະ ທີມງານອົງການຊ່ວຍເຫຼືອເດັກສາກົນ **SCI** ທີ່ຊີ້ນຳ ແລະ ໃຫ້ການສະໜັບສະໜູນໃນການອອກແບບປຶ້ມຄູ່ມືການຝຶກອົບຮົມເຫຼັ້ມນີ້.

ພວກເຮົາເຊື່ອວ່າປຶ້ມຄູ່ມືຝຶກອົບຮົມເຫຼັ້ມນີ້ຄົງຈະມີປະໂຫຍດຕໍ່ກັບບັນດາຄູຝຶກ, ອາຈານ ແລະ ກຸ່ມເພື່ອນສອນເພື່ອນສຳລັບການຝຶກອົບຮົມວຽກງານທາງການປະພຶດຢ່າງມີປະສິດທິຜົນ. ການຝຶກອົບຮົມບາງຢ່າງຈະໃຊ້ເວລາຍາວນານ ແລະ ເປັນວິທີການແບບຕໍ່ເນື່ອງເຊິ່ງຕ້ອງໄດ້ມີການທົບທວນຄືນ ແລະ ມີການດັດແກ້ວິທີການຕ່າງໆ ຄື ສາລະບານ ແລະ ວິທີການສິດສອນ ດັ່ງນັ້ນ ພວກເຮົາຈຶ່ງຕ້ອງການນິຍາມປຶ້ມຄູ່ມືເຫຼັ້ມນີ້ເປັນດັ່ງໂຄງຮ່າງການເຮັດວຽກເພື່ອພວກເຮົາຈະສາມາດເປີດໂອກາດໃນການໃຫ້ຄຳແນະນຳ, ດັດແກ້ ແລະ ປ່ຽນແປງໄປຕາມຄວາມຮຽກຮ້ອງຕ້ອງການຂອງໂຄງການ ແລະ ຊຸມຊົນ.

## ໂຄງການຮ່ວມມືປັບປຸງດ້ານໂພຊະນາການ

ຢູ່ໃນປະເທດເຮົາ ເດັກນ້ອຍຈຳນວນຫຼວງຫຼາຍໄດ້ຮັບຜົນກະທົບຈາກການຂາດສານອາຫານ ນັ້ນໝາຍເຖິງການຈະເລີນເຕີບໂຕ ແລະ ການພັດທະນາການຂອງເຂົາບໍ່ເປັນໄປຕາມເກນອາຍຸຂອງພວກເຂົາ. ເພາະສະນັ້ນ ຄູ່ຮ່ວມງານກັບລັດຖະບານ, ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI** ແລະ ຄູ່ຮ່ວມງານອື່ນໆຈຶ່ງໄດ້ເປີດກອງປະຊຸມສຳມະນາໂຄງການການຮ່ວມມືປັບປຸງໂພຊະນາການ ເພື່ອກ່າວຄຳປາໄສກ່ຽວກັບບັນຫາການຂາດສານອາຫານເຫຼົ່ານີ້. ໃນເລື່ອງຂອງໂຄງການການຮ່ວມມືປັບປຸງດ້ານໂພຊະນາການ **'SCALING'** ທີ່ຫຍໍ້ມາຈາກ **(Sustainable change Achieved by Linking Improved Nutrition and Governance)** ເຊິ່ງເປັນໂຄງການຂອງບັນດາຂະແໜງການຕ່າງໆເພື່ອປັບປຸງຄວາມປອດໄພຂອງອາຫານ ແລະ ໂພຊະນາການໃຫ້ຈຳນວນຫົວໜ່ວຍຄົວເຮືອນໃນເຂດຊົນນະບົດພາຍໃນ 14 ເມືອງທີ່ຖືກຄັດເລືອກເປັນເປົ້າໝາຍໃນ ແຂວງ ຫົວພັນ, ຫຼວງນ້ຳທາ, ຫຼວງພະບາງ ແລະ ຜົ້ງສາລີ ທາງພາກເໜືອຂອງ ສ ປປ ລາວ. ໂຄງການໄດ້ຮັບການສະໜັບສະໜູນທຶນໂດຍສະຫະພັບເອີຣົບ(**EU**) ແລະ ໄດ້ຮັບການຈັດຕັ້ງປະຕິບັດໂດຍກຸ່ມຄູ່ຮ່ວມງານ 4ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານຄື: ອົງການແຄຣ໌ ນານາຊາດປະຈຳ ສປປ ລາວ **CARE,** ອົງການຮ່ວມມືກັບປະເທດລາວ **CCL,** ອົງການກອງທຶນຊ່ວຍເຫຼືອເດັກ **CFL,** ແລະ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI** ເຊິ່ງເປັນຄູ່ຮ່ວມງານທີ່ນຳພາທາງ. ຈຸດປະສົງອັນຕົ້ນຕໍແມ່ນເລັ່ງໃສ່ກຸ່ມໄວໜຸ່ມຍິງ ແລະ ຊາຍ. ວິທີການຮຽນແບບເປັນກຸ່ມເພື່ອນສອນເພືອນອາດຈະຖືກນຳໃຊ້ເພື່ອປູກຈິດສຳນຶກ ແລະ ປ່ຽນແປງພຶດຕິກຳໃນກຸ່ມໄວໜຸ່ມກ່ຽວກັບວຽກງານດ້ານໂພຊະນາການ, ສຸຂະອະນາໄມ, ສຸຂະພາບທາງເພດ ແລະ ສຸຂະພາບຈະ  ເລີນພັນ ແລະ ບົດບາດ ຍິງ-ຊາຍ. ການຮຽນແບບເປັນກຸ່ມເພື່ອນສອນເພື່ອນຈະໄດ້ຮັບການຈັດຕັ້ງປະຕິບັດໂດຍເດັກຍິງ ແລະ ເດັກຊາຍທີ່ຖືກເລືອກຢູ່ໃນໂຮງຮຽນມັດທະຍົມຕອນຕົ້ນໃນຂົງເຂດຂອງໂຄງການເພື່ອຮ່ວມກັນຮຽນຮູ້ຫົວຂໍ້ຕ່າງໆດ້ວຍການເຮັດກິດຈະກຳທີ່ສະໜຸກສະໜານ.

### ກິດຈະກຳຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການຢູ່ໃນໂຮງຮຽນມັດທະຍົມຕອນຕົ້ນ

ການຮຽນແບບເປັນກຸ່ມເພື່ອນສອນເພື່ອນຈະໄດ້ຈັດຂຶ້ນສອງຄັ້ງພາຍໃນແຕ່ລະເດືອນຕິດຕໍ່ກັນໃນລະຫວ່າງສອງສາມເດືອນ.

ໃນທຸກໆກິດຈະກຳແມ່ນເພື່ອແນໃສ່ການພັດທະນາທັກສະດ້ານຄວາມຮູ້, ຄຸນສົມບັດ, ຄວາມເຊື່ອຖື ແລະ ທັກສະດ້ານອື່ນໆຂອງກຸ່ມໄວໜຸ່ມ ຍິງ-ຊາຍ (ເດັກໃນເກນອາຍຸ 10-14 ປີ ຫຼື ນັກຮຽນ ຊັ້ນ ມ1- ມ3) ເພື່ອເຮັດໃຫ້ເຂົາເຈົ້າມີຄວາມຮັບຜິດຊອບຕໍ່ສຸຂະພາບຂອງຕົນເອງ. ສິ່ງທ້າທາຍຕ່າງໆອາດຈະເປັນເປົ້າໝາຍທັງເດັກຍິງ ແລະ ຊາຍເພາະວ່າການຕອບສະໜອງຄວາມຕ້ອງການທາງດ້ານໂພຊະນາການ ແລະ ສິ່ງທ້າທາຍໃນເລື່ອງບົດບາດ ຍິງ-ຊາຍເປັນບັນທັດຖານທີ່ຈຳເປັນທີ່ຈະຕ້ອງໄດ້ມີສ່ວນຮ່ວມທັງສອງເພດໄປພ້ອມໆກັນ. ແຕ່ລະກຸ່ມຂອງກອງປະຊຸມໄວໜຸ່ມຍິງ-ຊາຍຈະຕ້ອງປະກອບມີຫົວຂໍ້ສະເພາະທີ່ຈະນຳມາສົນທະນາ. ສິ່ງທ້າທາຍເຫຼົ່ານີ້ອາດຈະຊ່ວຍໃຫ້ໄວໜຸ່ມ ຍິງ-ຊາຍ ໄດ້ມີໂອກາດເປີດອົກເປີດໃຈພ້ອມໄຂຂໍ້ສົງໃສຂອງຕົນເອງຕໍ່ກັບບັນຫາຕ່າງໆໃຫ້ແຈ່ມແຈ້ງຂຶ້ນ ພ້ອມທັງຍັງສາມາດແກ້ໄຂຄວາມກັງວົນໃຈຕ່າງໆໂດຍຜ່ານຄວາມຈິງທາງວິທະຍາສາດ. ເພື່ອເຮັດໃຫ້ວິທີການດັ່ງກ່າວມີຄວາມຕື່ນເຕັ້ນຈະຕ້ອງໄດ້ນຳໃຊ້ສື່ອຸປະກອນຕ່າງໆເຊັ່ນ: ການເລົ່າເລື່ອງ, ວິດີໂອ, ຮູບເງົາ, ສິລະປະ ແລະ ຫັດຖະກຳ (ກາຕູນ, ອື່ນໆ), ລະຄອນ, ການສະແດງບົດບາດສົມມຸດ ແລະ ອື່ນໆ. ເດັກນັກຮຽນຈະມີຄວາມມ່ວນຊື່ນ, ກະຕືລືລົ້ນໃນການຮໍ່າຮຽນເພື່ອປ່ຽນແປງພຶດຕິກຳຂອງເຂົາເຈົ້າ.

ບົດຮຽນເຫຼົ່ານີ້ອາດຈະໄດ້ນຳໃຊ້ໃນເວລາເຮັດກິດຈະກຳເພື່ອນສອນເພື່ອນໃນຫ້ອງຮຽນ.

| ລາຍລະອຽດຂອງບົດຮຽນ | |
|---|---|
| 1 | ວົງມົນແຫ່ງມິດຕະພາບ/ຮູ້ຈັກເຊິ່ງກັນ ແລະ ກັນ |
| 2 | ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ໄວໜຸ່ມເປັນຕົວແທນໃນການປ່ຽນແປງ |
| 3 | ໂພຊະນາການ (ພາກທີ່ 1) |
| 4 | ໂພຊະນາການ (ພາກທີ່ 2) |
| 5 | ໂພຊະນາການ (ພາກທີ່ 3) |
| 6 | ເພດສຶກສາ ແລະ ສຸຂະພາບຈະເລີນພັນ |
| 7 | ນ້ຳ, ສຸຂາພິບານ ແລະ ສຸຂະອະນາໄມສ່ວນບຸກຄົນ |

## ສາລະບານ


**ຄຳນຳ.......................................................................................................4**

1. **ກິດຈະກຳ 1.1 ບົດບາດຍິງ-ຊາຍ, ເພດ ແລະ ບົດບາດທີ່ເຮົາເຫັນໃນຊຸມຊົນ ..................4**
2. **ກິດຈະກຳ 2.1: ສິ່ງສະທ້ອນໃຫ້ເຫັນຄວາມບໍ່ເທົ່າທຽມກັນ ........................................8**
3. **ກິດຈະກຳ 3.1 ພາລະບົດບາດຂອງພວກເຮົາໃນຄອບຄົວ & ການເວົ້າກ່ຽວກັບບັນຫາໃນຄອບຄົວ ...........................................................................................10**
4. **ກິດຈະກຳ 4.1: ການຕັດສິນໃຈ ...........................................................................14**
5. **ກິດຈະກຳ :5.1 ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ .............................................15**

## ຄຳນຳ

ບົດບາດຍິງ-ຊາຍແມ່ນມີຄວາມໝາຍຍິ່ງກວ່າຄຳວ່າ ເພດຊາຍ ແລະ ເພດຍິງ. ບົດບາດຍິງ-ຊາຍແມ່ນໝາຍເຖິງພາລະບົດບາດທີ່ສັງຄົມສ້າງຂຶ້ນ ແລະ ພຶດຕິກຳທີ່ມີສ່ວນຮ່ວມໃນສັງຄົມ ໂດຍປົກກະຕິຂອງເພດຊາຍ ແລະ ເພດຍິງ. ສັງຄົມໄດ້ກຳນົດມາດຖານບົດບາດຍິງ-ຊາຍ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ.ໃນສັງຄົມໂດຍທົ່ວໄປ, ສັງຄົມເຫຼົ່ານີ້ມີມາດຕະຖານໃນການຈຳແນກເພດຊາຍ ແລະ ເພດຍິງຢູ່ເລື້ອຍໆ. ບົດບາດຍິງ-ຊາຍໝາຍເຖິງສິ່ງທີ່ແມ່ຍິງຄວນເຮັດ, ຄວນກິນ ຫຼື ຄວນນຸ່ງ ແລະ ສິ່ງທີເພດຊາຍຄວນເຮັດ, ຄວນກິນ ຫຼື ຄວນນຸ່ງ. ການຈຳແນກເຫຼົ່ານີ້ຍັງຄົງຢູ່ນານທີ່ເປັນອຸປະສັກຕໍ່ດ້ານສຸຂະພາບ ແລະ ສະຖານະດ້ານໂພຊະນາການຂອງພວກເຮົາໝົດທຸກຄົນ. ພວກເຮົາຈຳເປັນຕ້ອງໄດ້ຮຽນຮູ້ກ່ຽວກັບການກຳນົດມາດຖານບົດບາດຍິງ-ຊາຍ/ພາລະບົດບາດອິດທິພົນ, ແນວຄວາມຄິດ ແລະ ພຶດຕິກຳຂອງພວກເຮົາ.

ໃນບົດຮຽນນີ້ອາດຈະຊ່ວຍໃຫ້ພວກເຮົາເຂົ້າໃຈເຖິງຫົວຂໍ້ຂອງບົດບາດ ຍິງ-ຊາຍ, ຄວາມຮຸນແຮງ ແລະ ການອະນຸຍາດໃຫ້ມີການສົນທະນາກັບສະມາຊິກພາຍໃນກຸ່ມວ່າ ຍ້ອນຫຍັງ ແລະ ແມ່ນຫຍັງທີ່ເຮັດໃຫ້ພວກເຂົາຄິດວ່າ ສັງຄົມ ແລະ ຄອບຄົວມີຄວາມແຕກຕ່າງກັນໂດຍຄວາມຄາດຫວັງຈາກ ເດັກຊາຍ ແລະ ເດັກຍິງ.

| ແຜນພູມແນະນຳກິດຈະກຳແລະ ພາກຕ່າງໆຂອງບົດຮຽນ | | |
|---|---|---|
| **ຈຳນວນກິດຈະກຳ** | **ຊື່ກິດຈະກຳ** | **ໄລຍະເວລາ** |
| **1.1** | ບົດບາດຍິງ-ຊາຍ ແລະ ເພດ, ບົດບາດທີ່ເຮົາເຫັນຢູ່ໃນສັງຄົມ | 60 ນາທີ (ພັກຜ່ອນ 10 ນາທີ) |
| **2.1** | ສິ່ງທີ່ສະທ້ອນໃຫ້ເຫັນຄວາມບໍ່ເທົ່າທຽມກັນ | 40 ນາທີ (ພັກຜ່ອນ 10 ນາທີ)) |
| **3.1** | ບົດບາດຂອງພວກເຮົາໃນຄອບຄົວ & ການສົນທະນາກ່ຽວກັບບັນຫາຄອບຄົວ | 60 ນາທີ (ພັກຜ່ອນ 10 ນາທີ) |
| **4.1** | ການຕັດສິນໃຈ | 15 ນາທີ |
| **5.1** | ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ | 15 ນາທີ |
| | | **190** ນາທີ |

## ກິດຈະກຳ 1.1 ບົດບາດຍິງ-ຊາຍ, ເພດ ແລະ ບົດບາດທີ່ເຮົາເຫັນໃນຊຸມຊົນ

**ບົດແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ:**

**ພາກຂໍ້ມູນຂ່າວສານກ່ຽວກັບກິດຈະກຳ:**

ໃນກິດຈະກຳນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າຮຽນຮູ້ກ່ຽວກັບທັດສະນະ **'ເພດ'** ແລະ "**ບົດບາດຍິງ-ຊາຍ" ແນະນຳ**ສະມະຊິກພາຍໃນກຸ່ມໃຫ້ເຂົ້າໃຈວ່າ ເພດຂອງຄົນຜູ້ໜຶ່ງແມ່ນອ້າງອີງໂດຍຄວາມແຕກຕ່າງທາງຊີວະວິທະຍາລະຫວ່າງ ເພດຊາຍ ແລະ ເພດຍິງ. ໂດຍທົ່ວໄປແລ້ວ ບົດບາດຍິງ-ຊາຍແມ່ນບົດບາດ ແລະ ພຶດຕິກຳທີ່ສັງຄົມໄດ້ກຳນົດຂຶ້ນບົນພື້ນຖານເພດທາງຊີວະວິທະຍາຂອງທ້າວ/ນາງຄື ເພດຊາຍ ແລະ ເພດຍິງ. ພວກເຮົາພະຍາຍາມຈະຮຽນຮູ້ລາຍລະອຽດຂອງສິ່ງດັ່ງກ່າວນີ້ເພີ່ມຂຶ້ນໃນບົດຮຽນພາກນີ້.

**ຈຸດປະສົງ:**

- ເພື່ອ ກຳນົດ ຄວາມແຕກຕ່າງລະຫວ່າງເພດ ແລະ ບົດບາດຍິງ-ຊາຍ
- ເພື່ອທຳຄວາມເຂົ້າໃຈກ່ຽວກັບຕົ້ນແບບຂອງບົດບາດຍິງ-ຊາຍ ແລະ ຜົນກະທົບທີ່ມີຕໍ່ພວກເຂົາ
- ເພື່ອຄວາມເຂົ້າໃຈຄວາມແຕກຕ່າງລະຫວ່າງມາດຖານສັງຄົມ, ຄວາມຄາດຫວັງ ແລະ ຮ່າງກາຍທາງຊີວະວິທະຍາ.
- ເພື່ອສົ່ງເສີມສິ່ງທີ່ສະທ້ອນໃຫ້ເຫັນໃນເລື່ອງຂອງບົດບາດ ແລະ ມາດຖານສັງຄົມຕເດັກຍິງ ແລະ ເດັກຊາຍໃນສັງຄົມ.

**ເວລາ:** 50 ນາທີ (ແນະນຳຕົວ 5 ນາທີ, ເຮັດກິດຈະກຳກຸ່ມທີ່ໜຶ່ງ 10 ນາທີ, ສົນທະນາ 10 ນາທີ, ເຮັດກິດຈະກຳກຸ່ມທີ່ສອງ 10 ນາທີ, ສັງລວມກິດຈະກຳຕ່າງໆຂອງບົດຮຽນໂດຍຫຍໍ້ 15 ນາທີ ແລະ ພັກຜ່ອນ 10 ນາທີ)

**ການກະກຽມອຸປະກອນ:**

- ປ້າຍຮ່າງກາຍຂອງມະນຸດ 2 ອັນ
- ຮູບ(ສະຕິກເກີ)ສ່ວນຕ່າງໆຂອງຮ່າງກາຍມະນຸດ ຜູ້ຊາຍ ແລະ ເພດຍິງ  ແລະ ພາບບົດບາດຍິງ-ຊາຍ 2 ຊຸດ
- ສະກ໋ອດ ຫຼື ແນວຕິດ
- ເຈ້ຍ, ໂປດສເຕີ, ສໍດຳ/ບິກເຟີດ

## ເລີ່ມກິດຈະກຳ

6. **ພາກຄຳແນະນຳກ່ຽວກັບກິດຈະກຳ.** **ອ່ານສຽງດັງໆ**: ໃນບົດຮຽນພາກນີ້ ພວກເຮົາຈະໄດ້ຮຽນກ່ຽວກັບ**ບົດບາດ ຍິງ-ຊາຍ ແລະ ເພດ** ແລະ ຈະມາສ້າງຄວາມເຂົ້າໃຈກ່ຽວກັບບົດບາດ, ມາດຖານສັງຄົມຕໍ່ເດັກຍິງ ແລະ ເດັກຊາຍໃນຊຸມຊົນ ແລະ ສິ່ງທີ່ສາມາດເປັນມາດຕະຖານທີ່ທີ່ຈະນຳໄປຈັດຕັ້ງປະຕິບັດ.
7. **ແບ່ງ**ຜູ້ເຂົ້າຮ່ວມເຮັດກິດຈະກຳອອກເປັນສອງກຸ່ມໂດຍການແຍກ ເດັກຊາຍ ແລະ ເດັກຍິງ ອອກຈາກກັນ. ພ້ອມແບ່ງອຸປະກອນຕ່າງໆທີ່ໄດ້ຈັດກຽມໄວ້ໃຫ້ແຕ່ລະກຸ່ມຄົນລະຊຸດ.
8. **ຢາຍ**ຊຸດຮູບ(ສະຕິກເກີ)ສ່ວນຕ່າງໆຂອງຮ່າງກາຍມະນຸດ, ເສື້ອຜ້າ ແລະ ອື່ນໆ ທີ່ສາມາດຈຳແນກໄດ້ວ່າເປັນຜູ້ຊາຍ ຫຼື ຜູ້ຍິງ ໃຫ້ທັງສອງກຸ່ມ.
9. **ແນະນຳ**ໃຫ້ກຸ່ມໜຶ່ງນຳເອົາຮູບ(ສະຕິກເກີ)ສ່ວນຕ່າງໆຂອງຜູ້ຊາຍປະກອບເຂົ້າກັນ ແລະ ອີກກຸ່ມໜຶ່ງແມ່ນນຳເອົາຮູບ(ສະຕິກເກີ)ສ່ວນຕ່າງໆຂອງຜູ້ຍິງປະກອບໃສ່ກັນ.
10. **ໃຫ້**ເວລາທັງສອງກຸ່ມໄດ້ເຮັດກິດຈະກຳ 10 ນາທີ
11. **ຫຼັງຈາກ 10 ນາທີ, ແນະນຳ**ໃຫ້ທັງສອງກຸ່ມຂຶ້ນນຳສະເໜີຕາມຮູບພາບທີ່ໄດ້ປະກອບເທື່ອລະກຸ່ມກຸ່ມຊາຍ ແລະ ກຸ່ມຍິງ.
12. **ແນະນຳ**ໃຫ້ທັງສອງກຸ່ມແຍກອອກຮູບພາບ/ສິ່ງທີ່ທັງຜູ້ຊາຍ ແລະ ຍິງ ປະຕິບັດນຳກັນໄດ້ ແລະ ສ່ວນທີ່ຮູບພາບອັນໃດທີ່ປະຕິບັດບໍ່ຄືກັນ ຫຼື ບໍ່ສາມາດເຮັດແທນກັນໄດ້ແມ່ນໃຫ້ສົນທະນາກັນໃນກຸ່ມວ່າ ດ້ວຍການໃຊ້ຄຳ

**13.** ຖາມດ້ານລຸ່ມນີ້

<u>**ຂໍ້ແນະນໍາສໍາລັບຜູ້ອໍານວຍຄວາມສະດວກ:**</u>

ຍັງແຕ່ພາກສ່ວນທີ່ເຫຼືອແມ່ນຄວນຈະເປັນພາກສ່ວນທາງດ້ານຊີວະວິທະຍາດັ່ງທີ່ (ແມ່ຍິງ = ມີມົດລູກ, ຖືພາໄດ້, ອະໄວຍະວະເພດຍິງ(ຫີ), ການລ້ຽງລູກດ້ວຍນົມແມ່; ສ່ວນ ຜູ້ຊາຍ = ຖົງໜ່ວຍອັນທະ(ຫໍາ), ອະໄວຍະວະເພດຊາຍ(ໂຄຍ), ຄໍຫອຍ).

**14.** ສົນທະນາເພີ່ມຕື່ມໂດຍໃຊ້ຄໍາຖາມດັ່ງລຸ່ມນີ້

- ເປັນຫຍັງ ເຈົ້າຈິ່ງແຍກສສິ່ງນີ້'?
- ເປັນຫຍັງເຈົ້າຈິ່ງບໍ່ແຍກສິ່ງນັ້ນ?
- ສິ່ງທີ່ເດັກຍິງເຮັດເປັນປະຈໍາເຮັດມີຫຍັງແດ່?
- ເດັກຍິງຄົນອື່ນໆເຮັດໄດ້ບໍ່?
- ເດັກຊາຍເດ ເຮັດໄດ້ບໍ່ ຖ້າເຮັດບໍ່ໄດ້ ຍ້ອນຫຍັງ?
- ຖາມເບິ່ງວ່າ ແຕ່ລະຄົນຈະມີຄໍາເຫັນແຕກຕ່າງກັນບໍ່.
- ຖາມ: ຖ້າມີບາງຄົນມີຄໍາເຫັນທີ່ຕ່າງ, ເມື່ອບາງຄົນເວົ້າວ່າສິ່ງນີ້ ຫຼື ສິ່ງນັ້ນເດັກຊາຍ ຫຼື ເດັກຍິງ ບໍ່ສາມາດເຮັດໄດ້ ຖາມວ່າ ເປັນຫຍັງ/ຍ້ອນຫຍັງຈິ່ງເຮັດບໍ່ໄດ້? ຕົວຢ່າງມີຄົນໃດໜຶ່ງເວົ້າຂຶ້ນວ່າ ແມ່ຂ້ອຍຊັກເຄື່ອງໄດ້ແຕ່ພໍ່ຂອງຂ້ອຍລາວບໍ່ສາມາດຊັກໄດ້ໄດ້, ໃຫ້ຖາມພວກເຂົາວ່າ ຍ້ອນຫຍັງ. ຕົວຢ່າງ: ຖ້າພວກເຂົາເວົ້າວ່າ ແມ່ສາມາດຊັກເຄື່ອງໄດ້ ແຕ່ພໍ່ບໍ່ສາມາດຊັກເຄື່ອງໄດ້, ໃຫ້ຖາມວ່າ ຍ້ອນຫຍັງ? ຫຼື ບາງຄົນເວົ້າວ່າເດັກຊາຍສາມາດເຕະບານໄດ້ແຕ່ເດັກຍິງບໍ່ສາມາດເຕະໄດ້ ຖາມວ່າຍ້ອນຫຍັງ?

## ອ່ານບົດສະຫຼຸບ:

**ສະຫຼຸບເນື້ອໃນຂອງບົດຮຽນ**

ດັ່ງທີ່ ພວກເຮົາໄດ້ຮຽນມາໃນສອງກິດຈະກຳທີ່ຜ່ານມາ '

**ເພດ:** ແມ່ນໄດ້ກຳນົດຂຶ້ນມາດ້ວຍຊີວະວິທະຍາຂອງຕົວທ່ານເອງ. ຖ້າເຈົ້າເກີດມາພ້ອມກັບລະບົບສືບພັນຍິງເຈົ້າກໍຈະເປັນຜູ້ຍິງ; ແຕ່ໃນທາງກົງກັນຂ້າມ ຖ້າເຈົ້າເກີດມາພ້ອມກັບລະບົບສືບພັນຊາຍເຈົ້າກໍຈະເປັນຜູ້ຊາຍ.

**ບົດບາດຍິງ-ຊາຍ**' ບົດບາດຍິງ-ຊາຍແມ່ນຍາກຫຼາຍກ່ວາໃນການກຳນົດ ເພາະມັນແມ່ນພື້ນຖານຂອງສັງຄົມເປັນຜູ້ກຳນົດເຊັ່ນວ່າ: ທັດສະນະ/ແນວຄວາມຄິດ/ຄວາມເຊື່ອຖືຂອງສ່ວນບຸກຄົນ. ອີກຢ່າງໜຶ່ງ ມາດຖານ ຫຼື ບົດບາດຍິງ-ຊາຍໃນແຕ່ລະຂົງເຂດກໍບໍ່ຄືກັນ. ໃນສັງຄົມຕົວຈິງ ບາງຄອບຄົວແມ່ນໃຫ້ຜູ້ເປັນແມ່(ແມ່ຍິງ)ເປັນຫົວໜ້າຄອບຄົວ, ອີກບາງຄອບຄົວຊໍ້າພັດໃຫ້ຜູ້ເປັນພໍ່(ຜູ້ຊາຍ)ເປັນຫົວໜ້າຄອບຄົວ.

**ເວົ້າວ່າ:** ສະນັ້ນ ເຈົ້າສາມາດເປັນຜູ້ຍິງ ຫຼື ຜູ້ຊາຍກໍໄດ້ສຸດແລ້ວແຕ່ເຈົ້າຈະເກີດມາເປັນລັກສະນະແບບໃດ ແຕ່ສິ່ງດັ່ງກ່າວບໍ່ໄດ້ໝາຍຄວາມວ່າ ເຈົ້າຄວນຈະຖືກປະຕິບັດຕໍ່ເຈົ້າໃນສິ່ງທີ່ແຕກຕ່າງ ຫຼື ມີໂອກາດທີ່ແຕກຕ່າງກັນ. ຕົວຢ່າງ, ໃນຫຼາຍໆຂົງເຂດ, ຜູ້ຊາຍແມ່ນຈະຖືກເວົ້າເຢາະເຢີ້ຍ ຫຼື ຫົວຂວັນ ຖ້າພວກເຂົາຮ້ອງໄຫ້. ເພາະວ່າສິ່ງດັ່ງກ່າວມັນເປັນຄວາມເຊື່ອທີ່ວ່າ ຜູ້ຊາຍຕ້ອງເປັນເພດທີ່ເຂັ້ມແຂງ ແລະ ບໍ່ຄວນທີ່ຈະມີການຮ້ອງໄຫ້; ການທີ່ເຮົາຮ້ອງໄຫ້ແມ່ນຄວນຈະເປັນເພດທີ່ອ່ອນແອ/ຄົນທີ່ລະອຽດອ່ອນ. ອີກຕົວຢ່າງໜຶ່ງ ຄາດຫວັງເດັກຍິງເປັນຜູ້ດູແລຕ່າງໆ ແລະ ການເປັນແມ່ ເພາະສະນັ້ນ ພວກເຂົາຈຶ່ງໄດ້ກຳນົດໃຫ້ເດັກຍິງດູແລເດັກນ້ອຍ ແລະ ຮັບຜິດຊອບວຽກເຮືອນຊານແທນການເຮັດວຽກທາງນອກ .

**ເວົ້າວ່າ** ບາງຄັ້ງ ພວກເຮົາເຫັນສິ່ງທີ່ກຳລັງເກີດຂຶ້ນຢູ່ໃນສັງຄົມແມ່ນເປັນມາແຕ່ດົນນານແລ້ວ. ສິ່ງດັ່ງກ່າວບໍ່ໄດ້ໝາຍຄວາມວ່າຖືກຕ້ອງ ແລະ ຈະບໍ່ສາມາດທີ່ປ່ຽນແປງໄດ້. ຍົກຕົວຢ່າງ: ຜູ້ຊາຍສາມາດຊັກເຄື່ອງ, ຕົວຢ່າງ ຜູ້ຍິງສາມາດແປງລົດຖີບໄດ້. ພວກເຮົາຕ້ອງການຮຽນຮູ້ສິ່ງໃໝ່ໆ. ພວກເຮົາສາມາດແນະນຳໃຫ້ພໍ່ແມ່ຂອງເຮົາເຂົ້າໃຈເຖິງສິ່ງທີ່ເຮົາຕ້ອງການ ພ້ອມລອງລົງມືເຮັດກັບເພື່ອນໆໄດ້. ຫຼັງຈາກ ທີ່ເຈົ້າຈະເລີກຮຽນໃນມື້ນີ້, ລອງມາແລກປ່ຽນສິ່ງທີ່ເຈົ້າຈະລອງເຮັດອັນທີ່ພວກເຈົ້າໄດ້ຄິດວ່າມີແຕ່ຜູ້ຊາຍ ຫຼື ຜູ້ຍິງທີ່ສາມາດເຮັດໄດ້ມາຄົນລະໜຶ່ງຕົວຢ່າງເສຍກ່ອນ.

ຂໍອາສາສະໝັກສາມຄົນຂຶ້ນມາແລກປ່ຽນແນວຄວາມຄິດກັນ (ຖ້າເບິ່ງວ່າຈະມີໃຜອາສາຂຶ້ນມາບໍ່)

**ເວົ້າວ່າ** ຖ້າຜູ້ໃດຜູ້ໜຶ່ງໃນບ້ານຂອງເຈົ້າຖາມວ່າ ເປັນຫຍັງເຈົ້າຈຶ່ງເຮັດແບບນີ້ ໃຫ້ບອກພວກເຂົາວ່າເຈົ້າກຳລັງຮຽນເຮັດສິ່ງໃໝ່ໆທີ່ພວກເຈົ້າສາມາດເຮັດໄດ້

**ເວົ້າວ່າ** ພວກເຮົາມີຮູບພາບສີ່ໃບພ້ອມທີ່ຈະໃຫ້ເຈົ້າເບິ່ງໄປເທື່ອລະໃບ; ແລ້ວໃຫ້ພວກເຈົ້າເບິ່ງວ່າພາບດັ່ງກ່າວນີ້ມັນສື່ເຖິງຫຍັງ?

**ສະແດງ** ຮູບພາບຂ້າງລຸ່ມນີ້ ພ້ອມຖາມວ່າ ພວກເຂົາເຂົ້າໃຈແນວໃດກ່ຽວກັບຮູບພາບເຫຼົ່ານີ້.

1. ເພດ
2. ບົດບາດຍິງ-ຊາຍ
3. ຄວາມຫຼາກຫຼາຍ
4. ຄວາມສະເໝີພາບລະຫວ່າງຍິງ-ຊາຍ

**ເວລາຕໍ່ມາ** ຈົ່ງອ່ານນິຍາມຂ້າງລຸ່ມນີ້ໄປເທື່ອລະອັນ:

1. **ເພດ**: ເພດແມ່ນການກຳນົດຂຶ້ນມາໂດຍທາງຊີວະວິທະຍາ ແລະ ເຈົ້າມີມາຕັ້ງແຕ່ເກີດ. ມັນເກີດມີກັນໃນທົ່ວໂລກຂອງມະນຸດ ແລະ ເຮົາບໍ່ສາມາດປ່ຽນແປງໄດ້. ຖ້າເຈົ້າເກີດມາພ້ອມກັບອະໄວຍະວະເພດຊາຍເຈົ້າກໍຈະເປັນຜູ້ຊາຍ. ຖ້າເຈົ້າເກີດມາພ້ອມກັບອະໄວຍະວະເພດຍິງເຈົ້າກໍ່ຈະເປັນຜູ້ຍິງ.




2. **ບົດບາດຍິງ-ຊາຍ:** ບົດບາດຍິງ-ຊາຍ ບໍ່ແມ່ນກຳນົດຂຶ້ນມາໂດຍຊີວະວິທະຍາທີ່ມີຄວາມແຕກຕ່າງແຕ່ຢ່າງໃດ ແຕ່ສັງຄົມເປັນຜູ້ໃຫ້ນິຍາມວ່າຜູ້ຊາຍ ຫຼື ຜູ້ຍິງ, ເດັກຊາຍ ຫຼື ເດັກຍິງມັນໝາຍເຖິງສິ່ງທີ່ເຄີຍມີມາໃນສັງຄົມ. ມັນໄດ້ຖືພາລະບົດບາດ, ສະຖານະ ແລະ ຄວາມຄາດຫວັງສະເພາະໃນຄົວເຮືອນ, ສັງຄົມ ແລະ ວັດທະນະທຳ. ຕົວຢ່າງ: ບົດບາດ ຍິງ-ຊາຍ ແມ່ນອີງຕາມແນວຄວາມຄິດຂອງຕົວທ່ານເອງ ແລະ ມັນເປັນຮູບຮ່າງພື້ນຖານທາງຄວາມເຊື່ອຖືທາງສັງຄົມ.




3. **ຄວາມຫຼາກຫຼາຍ:** = ຄົນທຸກຄົນແມ່ນມີຄວາມແຕກຕ່າງກັນ ເຖິງແມ່ນວ່າ ພວກເຮົາມີຈະຄວາມແຕກຕ່າງໃນສິ່ງທີ່ປະກົດໃຫ້ເຫັນ, ໃຄວາມເຊື່ອ ແລະ ໃນຄວາມຄິດເຫັນກໍຕາມ. ແຕ່ພວກເຮົາທຸກຄົນຄວນຈະມີໂອກາດເໝືອນກັນ ແລະ ສາມາດມີຄວາມສະໜຸກສະໜານໄປຕາມບົດບາດຂອງໃຜມັນ.



4. **ຄວາມສະເໝີພາບລະຫວ່າງຍິງ-ຊາຍ**: ຄວາມເພີດເພີນມ່ວນຊື່ນ, ໂອກາດ, ຊັບພະຍາກອນ ແລະ ລາງວັນຂອງຄົນເຮົາໃນທຸກເພດໄວ ແລະ ທຸກເກນອາຍຸແມ່ນຈະເທົ່າທຽມກັນ. ຄວາມເທົ່າທຽມບໍ່ໄດ້ໝາຍຄວາມວ່າ ຍິງ-ຊາຍແມ່ນຕ້ອງເປັນແບບດຽວກັນໝົດທຸກຢ່າງ ແຕ່ໝາຍຄວາມວ່າ ພວກເຂົາຕ້ອງມີສິດທິທີ່ຈະເພີດເພີນມ່ວນຊື່ນ, ມີໂອກາດ, ແລະ ການປ່ຽນແປງຊີວິດອື່ນໆ, ບໍ່ແມ່ນຈະໄດ້ຮັບການປົກຄອງມາໂດຍສິ່ງໃດສິ່ງໜຶ່ງເປັນຕົ້ນແມ່ນສິ່ງທີ່ເຂົາເກີດມາເປັນເພດຍິງ ຫຼື ຊາຍ.




## ກິດຈະກຳ 2.1: ສິ່ງສະທ້ອນໃຫ້ເຫັນຄວາມບໍ່ເທົ່າທຽມກັນ

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ**

**ພາກຂໍ້ມູນຂ່າວສານກ່ຽວກັບກິດຈະກຳ:**

ໃນບົດຮຽນພາກນີ້ ເຮົາຈະໄດ້ມາເບິ່ງວິທີການທີ່ເດັກຊາຍ ແລະ ເດັກຍິງຖືກປະຕິບັດໃນຄອບຄົວ ແລະ ຊຸມຊົນຂອງເຮົາ.

**ຈຸດປະສົງ**: ຄຳແນະນຳຄວາມບໍ່ເທົ່າທຽມກັນ ແລະ ການຈຳແນກສິ່ງທີ່ຕົນເອງມັກ

**ເວລາ:** 40 ນາທີ (ແນະນຳເນື້ອໃນບົດຮຽນ 10 ນາທີ, ຫຼິ້ນເກມ 10 ນາທີ, ສັງລວມພາກຕ່າງໆຂອງບົດຮຽນໂດຍຫຍໍ້ 10 ນາທີ, ພັກຜ່ອນ 10 ນາທີ)

**ການກະກຽມອຸປະກອນ:** (#) ໄຫ(ເຕົ້າ), ໝາກບານທີ່ມີສີຕ່າງກັນ, ລາງວັນພື້ນຖານ, ພວກເຮົາກຳລັງຈະຫຼິ້ນເກມດັ່ງກ່າວ:

https://www.youtube.com/watch?v=snUE2jm_nFAgroup

## ເລີ່ມຫຼິ້ນເກມ

1. **ພາກຄຳແນະນຳສຳລັບກິດຈະກຳ.** **ອ່ານໂດຍໃຊ້ສຽງດັງ**: ໃນບົດຮຽນພາກນີ້ພວກເຮົາຈະໄດ້ຫຼິ້ນເກມ ແລະ ຫຼັງຈາກເກມຈົບລົງ ພວກເຮົາຈະໄດ້ສົນທະນາບົດຮຽນທີ່ໄດ້ຈາການຫຼິ້ນເກມ. ພວກເຮົາຈະຈັດແບ່ງເປັນຄູ່ ແລະ ແຕ່ລະຄູ່ສົມທຽບອ່ານມີ(ເດັກຍິງ 1ຄົນ ແລະ ເດັກຊາຍ 1ຄົນ)
2. **ຈັດເປັນ**ຄູ່ແລ້ວນຳເອົາກະຕ່າ ແລະ ຖົງໝາກບານມາວາງຕໍ່ໜ້າແຕ່ລະຄູ່
3. **ເວົ້າວ່າ**ໃນເກມນີ້ ພວກເຮົາຕ້ອງການໃຫ້ເຈົ້າເຮັດວຽກຮ່ວມກັນ ເຈົ້າຈະຕ້ອງເກັບໝາກບານໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ຈະຫຼາຍໄດ້ ແລະ ນຳເອົາໄປໃສ່ກະຕ່າທີ່ວາງໄວ້ຢູ່ຕໍ່ໜ້າເຈົ້າ. ການເກັບໝາກບານໃນຄັ້ງນີ້ເຈົ້າຈະມີເວລາ 10 ນາທີ.

   **ຖ້າພ້ອມແລ້ວເລີ່ມກັນເລີຍ!!!**
4. **ຫຼັງຈາກ 10 ນາທີ ແນະນຳ**ໃຫ້ພວກເຂົາກັບມາຢືນເປັນຄູ່, ຫຼັບຕາ ແລະ ເກາະແຂວນກັນໄວ້
5. **ເວົ້າວ່າ** ດຽວນີ້ ຂ້ອຍຈະມອບລາງວັນໃຫ້ເຈົ້າ
6. **ມອບ**ລາງວັນໃຫ້. ມອບໃຫ້ເດັກຊາຍຫຼາຍກວ່າເດັກຍິງ, ຈາກນັ້ນ ບອກໃຫ້ພວກເຂົາມືນຕາຂຶ້ນເພື່ອເບິ່ງລາງວັນຂອງພວກເຂົາ.
7. **ຖາມພວກເຂົາວ່າ**ໃຜໄດ້ລາງວັນຫຼາຍກວ່າກັນ
8. **ບອກວ່າ** ເພາະວ່າເຈົ້າເປັນຜູ້ຍິງຂ້ອຍເລີຍໃຫ້ເຈົ້າໜ້ອຍກວ່າ. ເພາະເຈົ້າເປັນຜູ້ຊາຍຂ້ອຍຈຶ່ງໃຫ້ເຈົ້າຫຼາຍກວ່າ
9. **ໃຫ້**ເວລາທັງສອງຄົນໄດ້ຄິດທົບທວນເບິ່ງສິ່ງທີ່ໄດ້ເຫັນ
10. **ຖາມເດັກຊາຍວ່າ**: ເຈົ້າຮູ້ສຶກແນວໃດທີ່ໄດ້ຮັບລາງວັນຫຼາຍກວ່າ? ເຈົ້າຄິດວ່າເຈົ້າສົມຄວນທີ່ຈະໄດ້ມັນບໍ່?
11. **ຖາມເດັກຍິງ**: ເຈົ້າຮູ້ສຶກແນວໃດກ່ຽວກັບການທີ່ໄດ້ຮັບລາງວັນຫຼາຍຂຶ້ນ? ເຈົ້າຄິດວ່າເຈົ້າສົມຄວນທີ່ຈະໄດ້ຮັບບໍ່?
12. **ຖາມເດັກຊາຍ**: ເຈົ້າຮູ້ສຶກແນວໃດເມື່ອເຫັນຄູ່ຮ່ວມຫຼິ້ນເກມຂອງເຈົ້າໄດ້ຮັບລາງວັນໜ້ອຍກວ່າ?
13. **ຖາມເດັກຍິງ**: ເຈົ້າຮູ້ສຶກແນວໃດ ເມື່ອເຫັນຄູ່ຮ່ວມຫຼິ້ນເກມຂອງເຈົ້າໄດ້ຮັບລາງວັນຫຼາຍກວ່າ?
14. **ຖາມວ່າ**: ມັນຍຸດຕິທຳບໍ່? ມັນຖືກຕ້ອງບໍ່ທີ່ເດັກຍິງຄວນໄດ້ຮັບໜ້ອຍກວ່າ?
15. **ຖາມວ່າ**: ສົນທະນາບາງຕົວຢ່າງຂອງການຝຶກບົດບາດຍິງ-ຊາຍໃນຄອບຄົວຂອງຊຸມຊົນ.

    - ສິ່ງດັ່ງກ່າວໄດ້ເກີດຂຶ້ນຢູ່ໃນຄອບຄົວ ຫຼື ຊຸມຊົນຂອງເຈົ້າ ຫຼື ບໍ່?
    - ເດັກຍິງ ແລະ ເດັກຊາຍຖືກປະຕິບັດໃນວິທີດຽວກັນນີ້ບໍ? ຍ້ອນຫຍັງ?
    - ເດັກຊາຍ ແລະ ເດັກຍິງກິນອາຫານຄືກັນບໍ?
    - ໃນພາເຂົ້າໃນເຮືອນຂອງເຈົ້າແຕ່ລະຄັ້ງແມ່ນໃຜເປັນຜູ້ເລີ່ມລົງມືກິນເຂົ້າກ່ອນ ພໍ່ ຫຼື ແມ່ ຫຼື ກິນພ້ອມກັນໝົດທຸກຄົນ?
    - ໃຫ້ເດັກຍິງອອກໂຮງຮຽນໄວກວ່າເດັກຊາຍບໍ?

16. **ຖາມວ່າ**: ພວກເຮົາຈະເຮັດແນວໃດເພື່ອຈະໃຫ້ມັນເທົ່າທຽມກັນ?

ໃຫ້ເວລາພວກເຂົາແລກປ່ຽນແນວຄວາມຄິດກັນ ແລະ ຫຼັງຈາກນັ້ນ **ສັງລວມບົດຮຽນດ້ວຍການເວົ້າວ່າ:**

> ເດັກຍິງກໍເໝືອນກັນກັບເດັກຊາຍ. ນາງຄວນຈະໄດ້ລາງວັນເທົ່າກັນ. ຖ້າທັງສອງເຮັດວຽກດຽວກັນ ພວກເຂົາກໍຄວນຈະໄດ້ຮັບລາງວັນເທົ່າກັນ. ໃຫ້ຈິນຕະນາການເບິ່ງວ່າຖ້າເຈົ້ານຸ່ງເສື້ອຂາວຄໍມົນຈະໄດ້ຮັບລາງວັນໜ້ອຍກວ່າຜູ້ທີ່ມີຜົມສັ້ນ. ສິ່ງດັ່ງກ່າວນັ້ນມັນຊັດເຈນບໍ? ເດັກຍິງບໍ່ໄດ້ໜ້ອຍໜ້າໄປກວ່າເດັກຊາຍ, ມັນກໍບໍ່ໄດ້ແຕກຕ່າງຫຍັງກັບຄົນທີ່ນຸ່ງເສື້ອຂາວຄໍມົນບໍ່ແມ່ນວ່າຈະບໍ່ມີຄຸນຄ່າເທົ່າຄົນທີ່ນຸ່ງເສື້ອສີດໍາຄໍມົນ ຫຼື ຜູ້ທີ່ມີຜົມສັ້ນບໍ່ມີຄຸນຄ່າເທົ່າກັບຜູ້ທີ່ມີຜົມຍາວ. ດັ່ງນັ້ນ ພວກເຮົາຄວນຈະເຮັດແນວໃດມັນຈຶ່ງຈະຍຸດຕິທໍາ? ໃຫ້ພວກເຂົາຕອບຄໍາຖາມ ແລະ ເຮັດໃຫ້ມັນຢູ່ໃນສະຖານະການທີ່ເປັນກາງ.
>
> **ເວົ້າວ່າ**: ໃນອາທິດນີ້ໃຫ້ລົມທະນາກັບເພື່ອນ ແລະ ຄອບຄົວຂອງເຈົ້າກ່ຽວກັບຄວາມແຕກຕ່າງຂອງວິຖີຊີວິດໃນສັງຄົມສໍາລັບເດັກຊາຍ ແລະ ເດັກຍິງ ແລະ ສັງເກດເບິ່ງວ່າພວກເຂົາຮູ້ສຶກເຖິງຄວາມແຕກຕ່າງນີ້ແນວໃດ.

ພັກຜ່ອນ 10 ນາທີ

## ກິດຈະກໍາ 3.1 ພາລະບົດບາດຂອງພວກເຮົາໃນຄອບຄົວ & ການເວົ້າກ່ຽວກັບບັນຫາໃນຄອບຄົວ

**ຄໍາແນະນໍາສໍາລັບຜູ້ນໍາພາກິດຈະກໍາເພື່ອນສອນເພື່ອນ**

**ພາກຂໍ້ມູນຂ່າວສານກ່ຽວກັບບົດຮຽນ:**

ໃນບົດຮຽນພາກນີ້ ເຈົ້າຈະໄດ້ຊ່ວຍແນະນໍາກຸ່ມຂອງເຈົ້າໃຫ້ເຂົ້າໃຈມາດຖານບົດບາດ ຍິງ-ຊາຍ ແລະ ຊ່ວຍກໍ່ສ້າງທັກສະຂອງການເຈລະຈາ, ທັກສະການສະໜັບສະໜູນ ແລະ ຄວາມເຫັນອົກເຫັນໃຈ.

**ຈຸດປະສົງ**:

- ຄໍາແນະນໍາມາດຖານ (ໂດຍສະເພາະມາດຖານຍິງ-ຊາຍ)
- ຊຸກຍູ້ບົດບາດທີ່ສະທ້ອນໃຫ້ເຫັນສໍາລັບເດັກຍິງ ແລະ ເດັກຊາຍໃນບ້ານ ເພື່ອຊ່ວຍຄົ້ນຫາສິ່ງທ້າທາຍທີ່ເຂົາປະເຊີນໃນແຕ່ລະວັນຂອງເຂົາເຈົ້າ.
- ເພື່ອພັດທະນາທັກສະຂອງການເຈລະຈາ, ທັກສະການສະໜັບສະໜູນ , ຄວາມເຫັນອົກເຫັນໃຈ

**ເວລາ:** 60 ນາທີ (ແນະນໍາພາກຕ່າງໆຂອງບົດຮຽນ 10 ນາທີ, ສະຫຼູບເລື່ອງຂອງ **ນ. ເຈ** 5 ນາທີ, ກຽມສະແດງບົດບາດສົມມຸດ 15 ນາທີ, ສະແດງບົດບາດສົມມຸດ 10 ນາທີ, ສັງລວມພາກຕ່າງໆຂອງບົດຮຽນ 10 ນາທີ, ພັກຜ່ອນ 10 ນາທີ)

**ການກະກຽມອຸປະກອນ**: ເຈ້ຍ, ບິກເຟີດ, ສໍດໍາ, ສໍສີ:

### ເລີ່ມກິດຈະກໍາ

1. **ພາກຄໍາແນະນໍາສໍາລັບກິດຈະກໍາ.** **ອ່ານໂດຍໃຊ້ສຽງດັງ**: ກ່ອນຈະເລີ່ມກິດຈະກໍານີ້ ມາໂອ້ລົມກັນກ່ຽວກັບມາດຖານຍິງ-ຊາຍເສຍກ່ອນ. ມີໃຜຮູ້ບໍ່ວ່າມາດຖານບົດບາດຍິງ-ຊາຍໝາຍເຖິງຫຍັງ? ລໍຖ້າເບິ່ງວ່າຈະມີຜູ້ໃດຜູ້ໜຶ່ງຕອບບໍ່.
2. **ອະທິບາຍ:** ມາດຕະຖານແມ່ນຄວາມຄາດຫວັງຂອງສັງຄົມ. ຄວາມຄາດຫວັງແມ່ນຄວາມເຊື່ອສິ່ງທີ່ແມ່ຍິງ/ເດັກຍິງຄວນເຮັດ ແລະ ສິ່ງທີ່ຜູ້ຊາຍ/ເດັກຊາຍຄວນເຮັດ ເຈົ້າຄວນຈະຈັດຕັ້ງປະຕິບັດ.

**ຕົວຢ່າງ**: ມີມາດຕະຖານທີ່ແຕກຕ່າງກັນສຳລັບກຸ່ມຄົນທີ່ມີເກນອາຍຸຕ່າງກັນ. ເມື່ອພວກເຮົາຍັງເປັນເດັກນ້ອຍ ມັນເປັນເລື່ອງທຳມະດາທີ່ພວກເຮົາຈະຍ່ຽວ ຫຼື ຈະຂີ້ໃສ່ສົ້ນ-ໂສ້ງຂອງຕົນເອງ...ແຕ່ເມື່ອພວກເຮົາເປັນຜູ້ໃຫຍ່ ຫຼາຍຄົນຄາດວ່າພວກເຮົາຈະບໍ່ຂີ້ບໍ່ຍ່ຽວໃສ່ສົ້ນ-ໂສ້ງຕົນເອງອີກຕໍ່ໄປ.

**ອີກຕົວຢ່າງໜຶ່ງແມ່ນການຄົວກິນ**: ຕອນພວກເຮົາຍັງນ້ອຍພວກເຮົາບໍ່ເຄີຍວ່າພວກເຮົາຈະໄດ້ຄົວກິນເອງ ເພາະການນຳໃຊ້ມີດ, ນ້ຳຮ້ອນ ຫຼື ນ້ຳມັນ ອາດຈະເປັນອັນຕະລາຍ. ແຕ່ເມື່ອພວກເຮົາເປັນຜູ້ໃຫຍ່ ເຮົາອາດຈະໄດ້ຄົວກິນເອງ.

3. **ເວົ້າວ່າ:** ຕາມມາດຖານບົດບາດຍິງຊາຍແມ່ນ ການຄາດຫວັງຂອງບົນພື້ນຖານຄວາມແຕກຕ່າງທາງເພດ.

**ຕົວຢ່າງ**: ຢູ່ໃນເຮືອນຂອງເຈົ້າ

- <u>ໃຜເປັນຜູ້ດູແລເດັກນ້ອຍ</u>? ລໍຖ້າໃຫ້ເຂົາເຈົ້າຕອບ.
- <u>ໃຜເປັນຜູ້ຄົວກິນ</u>? ລໍຖ້າໃຫ້ເຂົາເຈົ້າຕອບ
- <u>ໃຜເປັນຜູ້ອະນາໄມເຮືອນ</u>? ລໍ້ຖ້າໃຫ້ເຂົາເຈົ້າຕອບ.
- <u>ໃຜໄປເຮັດວຽກຢູ່ໄຮ່ຢູ່ນາ</u>,ສວນ? ລໍຖ້າໃຫ້ເຂົາເຈົ້າຕອບ.
- ຄິດກ່ຽວກັບສິ່ງທີ່ພໍ່ແມ່ຄາດຫວັງໃຫ້ພວກເຈົ້າເຮັດ. ການຄາດຫວັງນັ້ນມັນແຕກຕ່າງຈາກນ້ອງຊາຍ ແລະ ນ້ອງສາວແນວໃດ?.

4. **ເວົ້າວ່າ** ດຽວນີ້. ຂ້ອຍຈະບອກເຈົ້າເລື່ອງໜຶ່ງ ດັ່ງນັ້ນ ເຈົ້າສາມາດຄົ້ນຄິດກ່ຽວກັບຄຳຖາມເຫຼົ່ານີ້ ແລະ ດັ່ງນັ້ນ ເຈົ້າຈະໄດ້ຮຽນຮູ້ກ່ຽວກັບວິທີທີ່ເດັກຍິງ ແລະ ເດັກຊາຍຊ່ວຍວຽກກັນຢູ່ໃນບ້ານຂອງເຂົາ.

**<u>ເລົ່າເລື່ອງຂອງ ນາງ ເຈ ແລະ ອ້າຍຂອງນາງ</u>**

ນາງ ເຈ ອາໄສຢູ່ກັບພໍ່ແມ່ ແລະ ອ້າຍ 2ຄົນ. ອ້າຍຂອງນາງຊື່ ທ. ອາແລັງ ແລະ ທ ຈິກ. ແຕ່ລະມື້ ອ້າຍຂອງນາງທັງສອງມີແຕ່ອອກໄປທ່ຽວຫຼິ້ນນຳໝູ່ເລື້ອຍໆ. ສ່ວນ ນາງ ເຈ ຕ້ອງໄດ້ເຮັດວຽກເຮືອນ. ທຸກໆມື້ ນາງຕື່ນນອນຕັ້ງແຕ່ 5ໂມງເຊົ້າ ເພື່ອໄປແຕ່ງຢູ່ຄົວກິນສຳລັບທຸກຄົນໃນຄອບຄົວ ແລະ ຫຼັງຈາກ ເລີກຮຽນນາງໄດ້ອະນາໄມບ້ານ ແລະ ເຮັດສວນປູກຜັກຢູ່ສວນຄົວຂ້າງເຮືອນ.

ເມື່ອພໍ່ແມ່ຂອງນາງເຫັນ ນາງ ເຈ ຊ່ວຍວຽກເຮືອນໄດ້ຫຼາຍຢ່າງ ພວກເຂົາກໍຮູ້ສຶກດີໃຈ ແລະ ຢາກໃຫ້ນາງຊ່ວຍວຽກຫຼາຍຂຶ້ນອີກ. ນາງ ເຈ ມັກໄປໂຮງຮຽນກັບອ້າຍໃນແຕ່ລະມື້. ຢ່າງໃດກໍຕາມ ພໍ່ແມ່ຂອງນາງໄດ້ບອກໃຫ້ນາງອອກໂຮງຮຽນ ເພາະມີວຽກບ້ານຫຼາຍ ດັ່ງນັນ ນາງຈຶ່ງບໍ່ສາມາດເຂົ້າໂຮງຮຽນອີກຕໍ່ໄປ.

ເມື່ອ ນາງ ເຈ ໄດ້ຍິນແນວນັ້ນກໍຮູ້ສຶກໂສກເສົ້າເສຍໃຈ. ເມື່ອຜູ້ເປັນອ້າຍຂອງນາງ ທ. ອາແລັງ ແລະ ທ. ຈິກ ເຫັນຄືແນວນັ້ນຈຶ່ງຖາມນ້ອງສາວວ່າ "ເປັນຫຍັງນ້ອງຄືມາໂສກເສົ້າແທ້?" ນາງ ເຈ ຈຶ່ງໄດ້ເລົ່າເລື່ອງທີ່ເກີດຂຶ້ນກັບນາງທຸກຢ່າງສູ່ອ້າຍຟັງວ່າ ພໍ່ແມ່ໄດ້ບອກໃຫ້ນາງອອກໂຮງຮຽນມາຊ່ວຍວຽກເຮືອນ ແຕ່ນາງຢາກເຂົ້າໂຮງຮຽນຕໍ່. ເມື່ອໄດ້ຍິນຄືແນວນັ້ນ ອ້າຍຂອງນາງທັງສອງຈຶ່ງຄິດວ່າຈະຊ່ວຍນ້ອງສາວແນວໃດ. ຈາກນັ້ນ ທ. ອາແລັງ ແລະ ທ. ຈິກ ຄິດວ່າຈະຕ້ອງໄດ້ຊ່ວຍນ້ອງສາວເຮັດວຽກເຮືອນ ດັ່ງນັ້ນ ນາງຈຶ່ງຈະມີເວລາໄປໂຮງຮຽນຕໍ່.

5. **ຕັ້ງຄຳຖາມພາຍໃນກຸ່ມດັ່ງຄຳຖາມຂ້າງລຸ່ມນີ້:**

– ເກີດຫຍັງຂຶ້ນໃນບ້ານຂອງ ນາງ ເຈ?
– ນາງ ເຈ ສາມາດເຮັດຫຍັງໄດ້ແດ່?
– ທ. ອາແລັງ ແລະ ທ. ຈິກ ໄດ້ຊ່ວຍ ນາງ. ເຈ ແນວໃດ? ເຈົ້າຄິດວ່າແມ່ນຫຍັງທີ່ເຮັດໃຫ້ ນາງ. ເຈ ສາມາດໄປໂຮງຮຽນຕໍ່ໄດ້.
– ນາງ ເຈ ກັບອ້າຍຂອງນາງໄດ້ຮັບການລ້ຽງດູທີ່ແຕກຕ່າງກັນຄືແນວໃດ?

ຄວາມແຕກຕ່າງເຫຼົ່ານີ້ມີຜົນກະທົບຕໍ່ເພດຍິງ ແລະ ເພດຊາຍຄືແນວໃດ?

***ສົນທະນາ 5 ນາທີ ຈົດຄຳຕອບເຖິງໜ້າກະດານ***

**6.** ດຽວນີ້ພວກເຮົາຈະໄດ້ສະຄອນ/ບົດບາດສົມມຸດທີ່ຄ້າຍຄືກັນກັບບົດເລື່ອງຂອງນາງ ເຈ ຂໍອາສາສະໝັກ 5 ຄົນ ທີ່ຈະສະແດງເປັນຕົວລະຄອນ(ເດັກຍິງ 1ຄົນ, ອ້າຍ, ນ້ອງຊາຍ, ພໍ່ ແລະ ແມ່ ) 2 ຄົນສະແດງເປັນພໍ່ແມ່, 1 ຄົນເປັນລູກສາວ ແລະ ອີກ 2 ຄົນແມ່ນເປັນລູກຊາຍ. ສະຖານະການກໍ່ຄືວ່າພໍ່ແມ່ມີຄວາມກັງວົນເລື່ອງວຽກຄອບຄົວຫຼາຍຂຶ້ນແຕ່ລູກສາວ ແລະ ລູກຊາຍກໍ່ເຂົ້າໂຮງຮຽນ

*ສ້າງຕົວລະຄອນຫຼື ບົດບາດສົມມຸດເພື່ອສ້າງທັກສະໃນການຕໍ່ລອງ ແລະ ທັກສະໃນການເຂົ້າໃຈເຖິງຄວາມຮູ້ສຶກຜູ້ອື່ນ*

*ໃຫ້ເວລາ15 ນາທີໃນການກະກຽມຕົວລະຄອນ ແລ້ວໃຫ້ເຂົາເຈົ້າສະແດງ. ຫຼັງຈາກເຂົາເຈົ້າໄດ້ສະແດງໄປແລ້ວ ກ່າວຄວາມຂອບໃຈທີ່ອາສາໃນການສະແດງ ແລະ ຖາມວ່າ ເປັນຫຍັງການສະແດງພວກເຂົາເຈົ້າສະແດງຈຶ່ງອອກມາໄດ້ດີ ແລະ ຍົກຕົວຢ່າງວ່າເຂົາເຈົ້າມີທັດສະຄະຕິ, ທັກສະການເຈລະຈາຕໍ່ລອງກັນແນວໃດ ແລະ ມີການເຫັນອົກເຫັນໃຈຄວາມຮູ້ສຶກຂອງຜູ້ອື່ນຄືແນວໃດ*

***ບົດລະຄອນ***

| | |
|---|---|
| **ນ້ອງຊາຍເວົ້າວ່າ** | *ພໍ່ ແລະ ແມ່ ເອີຍ ດຽວນີ້ ເອື້ອຍວ່າລາວຊິບໍ່ໄປໂຮງຮຽນແລ້ວ ພໍ່ແມ່ບອກວ່າ ວຽກເຮືອນມັນຫຼາຍ ໃຫ້ເອື້ອຍເຮັດວຽກເຮືອນຊ່ວຍພໍ່ແມ່ ແລະ ໃຫ້ແຕ່ອ້າຍ ແລະ ນ້ອງຊາຍໄປໂຮງຮຽນຊັ້ນເບາະ ເອື້ອຍເຮົາລາວບໍ່ຢາກອອກໂຮງຮຽນໄດ໋ພໍ່ແມ່ ລາວຢາກຮຽນຕໍ່ ແລະ ເອື້ອຍກໍ່ເປັນຄົນຮຽນໜັງສືເກັ່ງອີກ ພໍ່ແມ່ວ່າແນວໃດ?* |
| **ແມ່ເວົ້າວ່າ** | ລູກເອີຍ ອັນເລື່ອງຮຽນກໍ່ຢາກໃຫ້ຮຽນຕໍ່ຫັ້ນລະ ແຕ່ວ່າເບິ່ງວຽກແມ່ນີ້ເດພວກລູກໆ ສ່ວນຫຼາຍແມ່ນແມ່ເປນັຜູ້ເຮັດວຽກເຮືອນຄົນດຽວ ແຖມບໍ່ໜຳ ແມ່ຍັງໄປເຮັດວຽກສວນນຳພໍ່ອີກ ຖ້າເອື້ອຍເຈົ້າເຂົ້າໂຮງຮຽນຊ່ວຍແມ່ໄດ້ແຕ່ບາງເວລາເທົ່ານັ້ນ ຖ້າອອກໂຮງຮຽນລາ ຄິດວ່າຈະຊ່ວຍວຽກເຮືອນໄດ້ຫຼາຍ ແລະ ສ່ວນລູກຊາຍກໍ່ໄດ້ເຂົ້າຮຽນຈົບຈົບຊັ້ນດອກລູກໆເອີຍ. |
| **ພໍ່ເວົ້າວ່າ** | ແມ່ນຄວາມແມ່ມັນ: ຜູ້ເປັນລູກຍິງກໍ່ເຮັດວຽກເຮືອນກໍ່ເກັ່ງແດ່ ຖ້າລູກຍິງອອກໂຮງຮຽນມາຊ່ວຍວຽກຄອບຄົວພໍ່ວ່າຈະແບ່ງເບົາວຽກຄອບຄົວໄດ້ຫຼາຍ ແລະ ເປັນລູກຍິງກໍ່ຊິບໍ່ຈຳເປັນຕ້ອງຮຽນໜັງສືຫຼາຍດອກພໍ່ແມ່ວ່າ ແລະ ສ່ວນວ່າລູກຊາຍກໍ່ສືບຕໍ່ຮຽນໜັງສືໃຫ້ຈົບ. |
| **ລູກສາວເວົ້າວ່າ** | ແມ່ ແລະ ພໍ່ເອີຍ ລູກກໍ່ຢາກຮຽນໜັງສືຕໍ່ຈົບຈົບ ແລະ ລູກນ່ຳ ມີຄວາມຝັນວ່າຢາກຮຽນໜັງສືສູງໆຈົບຈົບມະຫາໄລພຸ້ນ ລູກວ່າອ້າຍ ແລະ ນ້ອງຊາຍກໍ່ເຮັດວຽກເຮືອນເປັນຄືກັນກັບນີ້ລະ ຖ້າພໍ່ແມ່ສອນ ແລະ ຝຶກເຮັດວຽກເຮືອນເທື່ອລະເທື່ອລະນ້ອຍ ແລ້ວໃຫ້ອ້າຍ ແລະ ນ້ອງຊາຍພາກັນເຮັດວຽກເຮືອນຊານຊ່ວຍຄອບຄົວ ວຽກມັນຈະແລ້ວໄວ ແລະ ເປັນການແບ່ງເບົາວຽກພໍ່ແມ່ ພວກເຮົາທັງໝົດກໍ່ຈະມີເວລາໄປໂຮງຮຽນໄດ໋ແມ່. |
| **ອ້າຍເວົ້າວ່າ** | ເອີພໍ່ ແລະ ແມ່ເອີຍ ນ້ອງລາວເວົ້າຖືກ ພວກເຮົາຈະພາກັນເຮັດວຽກເຮືອນຊານຊ່ວຍພໍ່ແມ່ ແລະ ອ້າຍ , ເອື້ອຍ, ນ້ອງ ພວກເຮົາທຸກຄົນກໍ່ຈະໄດ້ໄປໂຮງຮຽນຄືກັນ. |
| **ພໍ່ເວົ້າວ່າ** | ໂອພວກລູກໆເວົ້າມາມີເຫດຜົນ ຈັ່ງແມ່ນພວກລູກຮັກແພງກັນດີ ແລະ ສະມັກຄີກັນດີເນາະ ເອົາໆເຫັນດີຕາມນີ້ເລີຍ ສ່ວນວຽກເຮືອນແມ່ນໃຫ້ຊ່ວຍກັນເຮັດເດີ ແລະ ສ່ວນວຽກເຮືອນອັນໃດທີ່ພວກລູກເຮັດບໍ່ແລ້ວ ພໍ່ແມ່ຫາກຊິພາກັນເຮັດຊ່ວຍກັນດອກ ບໍ່ຕ້ອງເປັນຫ່ວງ |
| **ແມ່ເວົ້າວ່າ** | ເຫັນດີນຳ ພວກລູກໆທຸກຄົນໄປໂຮງຮຽນນຳກັນສາ ແລະ ຢ່າພາກັນຂາດຮຽນເດີລູກ ຍິ້ມຍາວໆໆໆໆໆ ... |
| **ພວກລູກໆພາກັນດີໃຈ** | ເຢ່ໆໆໆແຕ່ນີ້ຕໍ່ໄປ ພວກເຮົາຈະພາກັນໄປໂຮງຮຽນ ແລະ ຫຼິ້ນກິລາຢູ່ໂຮງຮຽນນຳກັນເນາະ ເຢ່ໆໆ |

**7.** ຄຳຖາມສົນທະນາສັ້ນໆ

- ພວກທ່ານເຫັນຫຍັງແດ່ໃນບົດລະຄອນນີ້)
- ພວກທ່ານຮູ້ແນວໃດກັບລະຄອນເລື່ອງນີ້
- ພວກເຮົາສາມາດນຳໄປປະຕິບັດຢູ່ຄອບຄົວເຮົາແນວໃດ?

ສົນທະນານຳກັນປະມານ 5 ນາທີ. ຂຽນຄຳເຫັນຕ່າງໆໃສ່ກະດານ ແລະ ອ່ານບົດສະຫຼຸບກ່ຽວກັບບົດເລື່ອງຂອງນາງ ເຈຢູ່ດ້ານລຸ່ມນີ້:

**ສະຫຼຸບບົດຮຽນເລື່ອງຂອງ ນາງ ເຈ**

**ອ່ານໂດຍໃຊ້ສຽງດັງ:**

**ເວົ້າວ່າ** ບາງຄັ້ງ ພວກເຮົາພົບວ່າບັນດາຄອບຄົວເຫຼົ່ານັ້ນມີຄວາມທ້າທາຍຫຼາຍຢ່າງ ເພາະມັນມີຫຼາຍໆຈຸດປະສົງທີ່ຈຳເປັນທີ່ເກີດຂຶ້ນຢູ່ໃນຄອບຄົວ. ເດັກຍິງມີພາລະຫຼາຍກວ່າເດັກຊາຍເປັນປະຈຳ. ສິ່ງດັ່ງກ່າວເປັນເພາະວ່າຄອບຄົວບໍ່ໄດ້ມີໂອກາດຄົ້ນຫາວິທີການປະຕິບັດໜ້າທີ່ໃນທາງທີ່ແຕກຕ່າງ. ຕົວຢ່າງງ: ຄອບຄົວໜຶ່ງອາດຈະບໍ່ເຄີຍຄິດວ່າ ເດັກຍິງອາດຈະບໍ່ແມ່ນສິ່ງທີ່ເໝາະສົມທີ່ຈະດູແລນ້ອງ ແລະ ເດັກຍິງອາດຈະບໍ່ຮູ້ຈະອະທິບາຍເລື່ອງຕ່າງໆເຫຼົ່ານີ້ທີ່ເກີດຂຶ້ນກັບເຂົາ. ນາງຮູ້ແຕ່ວ່າ ຖ້ານາງບໍ່ເອົານ້ອງແມ່ຂອງນາງອາດຈະຮ້າຍດ່າ ແລະ ປະຕິບັດສິ່ງທີ່ບໍ່ເໝາະສົມຕໍ່ນາງ. ການໃຊ້<u>ທັກສະການສື່ສານທີ່ດີ</u>ມັນເປັນສິ່ງຈຳເປັນທີ່ພໍ່ແມ່ຂອງພວກເຮົາຄວນຈະໃຊ້ຢ່າງສະຫງົບອາລົມ ແລະ ໂດຍໃຊ້ເຫດ ແລະ ຜົນ, ບໍ່ແມ່ນຈະຕະຄອກໃສ່.
ໃຫ້ຂຽນສິ່ງຕ່າງໆທີ່ຂັດກ້ອງລົງໃນກະດານ.

**ເວົ້າວ່າ** ຄອບຄົວເຫຼົ່ານັ້ນອາດຈະບໍ່ນຶກວ່າເດັກຊາຍກໍສາມາດຊ່ວຍວຽກເຮືອນໄດ້ເຊັ່ນ: ອະນາໄມເຮືອນ ຫຼື ຊັກເຄື່ອງ. ມັນແມ່ນສິ່ງຈຳເປັນທີ່ຈະຕ້ອງໄດ້<u>ມີການການສື່ສານ</u>ກ່ຽວກັບສະຖານະການທີ່ພວກເຮົາເຄີຍເປັນ ສະນັ້ນ ພວກເຮົາຈຶ່ງສາມາດປັບປຸງໄດ້. ສ່ວນໜຶ່ງໃນນີ້ແມ່ນ<u>ການແລກປ່ຽນຄວາມຮູ້ສຶກ, ການຄົ້ນຄິດ ແລະ ການຮລົມກັນເລື່ອງການແບ່ງເບົາຊ່ວຍເຊິ່ງກັນ ແລະ ກັນ.</u>

**ເວົ້າວ່າ** ການໃຫ້ອ້າຍແບ່ງເບົາວຽກມັນເປັນສິ່ງທີ່ດີ. ພໍ່ແມ່ຂອງ ນ. ເຈ ຕ້ອງການຄວາມຊ່ວຍເຫຼືອເຮັດວຽກຢູ່ເຮືອນ, ສິ່ງດັ່ງກ່າວສາມາດເຂົ້າໃຈໄດ້. ຖ້າຫາກເດັກຍິງຮູ້ສຶກວ່າ ນາງມີຄວາມຮັບຜິດຊອບຫຼາຍເກີນໄປນາງຄວນຈະລົມກັບອ້າຍ, ນ້ອງ ແລະ ແລະ ສະມະຊິກໃນຄອບຄົວໃນເລື່ອງການແບ່ງວຽກຂອງຄອບຄົວ.

**ເວົ້າວ່າ** ວຽກເຮືອນຈະຕ້ອງໄດ້ແບ່ງສ່ວນໃຫ້ເຮັດເທົ່າກັນ ເພາະມັນເປັນຄວາມຮັບຜິດຊອບຂອງທຸກໆຄົນໃນຄອບຄົວ. ຄົນໃນຄອບຄົວທຸກຄົນຄວນຈະມີການປະກອບສ່ວນ ແລະ ດັ່ງນັ້ນ ມັນອາດຈະເຫັນວ່າເປັນເລື່ອງທຳມະດາ. ເດັກຍິງ ແລະ ເດັກຊາຍສາມາດຊ່ວຍກັນເຮັດວຽກເຫຼົ່ານີ້ໄດ້ ດັ່ງນັ້ນ ທຸກຄົນຈຶ່ງຈະມີໂອການໄດ້ເຂົ້າໂຮງຮຽນ ແລະ ຮຽນຕໍ່ໄດ້. ເດັກຍິງກໍເໝືອນກັບເດັກຊາຍ, ທັງສອງລ້ວນແຕ່ຕ້ອງການເວລາຫຼິ້ນນຳໝູ່, ຫຼິ້ນກິລາ, ພັກຜ່ອນ ຫຼື ເຮັດໃນສິ່ງທີ່ຕົນເອງມັກ.

**ເວົ້າວ່າ:** ເດັກຍິງຈະລົມເລື່ອງການແບ່ງເບົາວຽກກັບອ້າຍ, ນ້ອງ ຂອງພວກເຂົາໄດ້ແນວໃດ? ພວກເຈົ້າຈະເຮັດແນວໃດ (ເມື່ອໃດ, ແມ່ນຫຍັງ, ເຈົ້າຈະຖາມແບບນີ້ບໍ)? ໃຫ້ຂຽນຄຳຕອບຂອງພວກເຂົາລົງໃນກະດານ.

**ເວົ້າວ່າ:** ເດັກຊາຍຈະໂອ້ລົມນຳພໍ່ແມ່ຂອງພວກເຂົາເພື່ອໃຫ້ພວກເຂົາເຂົ້າໃຈ ແລະ ໃຫ້ພວກເຂົາໃຫ້ໂອກາດນ້ອງສາວຂອງພວກເຂົາແນວໃດ? ເຈົ້າຄິງຈະຮູ້ສຶກແນວໃດທີ່ໄດ້ເຮັດວຽກເຮືອນທີ່ປົກກະຕິແລ້ວນ້ອງສາວເປັນຜູ້ເຮັດ? ແມ່ນຫຍັງຈະຍາກສຳລັບເຈົ້າເມື່ອເຈົ້າເຮັດວຽກນີ້? ຂຽນຄຳຕອບຂອງພວກເຂົາລົງໃນກະດານ.

**ເວົ້າວ່າ** ເດັກຊາຍ ແລະ ເດັກຍິງສາມາດຝຶກຝົນທັກສະທີ່ເອີ້ນວ່າ ຄວາມເຫັນອົກເຫັນໃຈທີ່ໝາຍຄວາມວ່າມີຄວາມເຂົ້າອົກເຂົ້າໃຈສິ່ງທີ່ຄົນອື່ນກຳລັງປະເຊີນຢູ່. ເພື່ອສະແດງຄວາມເຫັນອົກເຫັນໃຈເຈົ້າຕ້ອງຕັ້ງໃຈຟັງສິ່ງທີ່ບຸກຄົນໃດໜຶ່ງກຳລັງເລົ່າບັນຫາຕ່າງໆໃຫ້ເຈົ້າຟັງຢ່າງລະມັດລະວັງ, ໃຫ້ໂອກາດພວກເຂົາໄດ້ລະບາຍບັນຫາທີ່ຄ້າງຄາໃຈໃຫ້ຟັງຈົນຈົບເສຍກ່ອນເຈົ້າຈະເຂົ້າໃຈໃນສິ່ງທີ່ພວກເຂົາເວົ້າ ຈາກນັ້ນ ເຈົ້າຈຶ່ງຊີ້ແຈງບັນຫາທີ່ເຈົ້າໄດ້ຮັບຟັງໃຫ້ເຂົາເຈົ້າ. ເດັກຍິງ ແລະ ເດັກຊາຍຍັງສາມາດໃຊ້ທັກສະໃນການເຈລະຈາຂອງພວກເຂົາເພື່ອສະແດງຄວາມຍິນດີນຳສິ່ງທີ່ມັນເປັນໄປໄດ້ສຳລັບພວກເຂົາ.

*[ພັກຜ່ອນ 10ນາທີ]*

## ກິດຈະກຳ 4.1: ການຕັດສິນໃຈ

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ**

**ພາກຂໍ້ມູນຂ່າວສານກ່ຽວກິດຈະກຳ:**

ໃນບົດຮຽນພາກນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າສະທ້ອນເຖິງບົດບາດຂອງເດັກຊາຍ ແລະ ເດັກຍິງໃນການຕັດສິນໃຈໃນຄອບຄົວ.

**ຈຸດປະສົງ:** ເພື່ອສົ່ງເສີມສິ່ງທີ່ສະທ້ອນໃຫ້ເຫັນບົດບາດຂອງເດັກຍິງ ແລະ ເດັກຊາຍໃນການຕັດສິນໃຈ ແລະ ຊຸກຍູ້ໃຫ້ເດັກຍິງມີສ່ວນຮ່ວມໃນການຕັດສິນໃຈ.

**ເວລາ: 15** ນາທີ

**ການກະກຽມອຸປະກອນ:** ບິກ, ເຈ້ຍໂປສເຕີ, ສໍ/ບິກເຟີດ

**ເລີ່ມກິດຈະກຳ**

1. **ພາກຄຳແນະນຳສຳລັບກິດຈະກຳ. ອ່ານໂດຍໃຊ້ສຽງດັງ:** ໃນບົດຮຽນພາກນີ້ ພວກເຮົາກຳລັງຊອກຫາການປະຕິບັດໜ້າທີ່ຂອງເດັກຊາຍ ແລະ ເດັກຍິງໃນຄອບຄົວ ແລະ ສັງຄົມຂອງພວກເຮົາ.
2. **ສ້າງແຜນພູມໃນໂປສເຕີດັ່ງຕາຕາລາງຂ້າງລຸ່ມນີ້ ແລ້ວຕິດໃສ່ຝາ/ກະດານ**

| ກິດຈະກຳ | ຕົນເອງ | ແມ່ | ພໍ່ | ພໍ່ແມ່ | ຮ່ວມກັນ |
|---|---|---|---|---|---|
| ການສຶກສາ | | | | | |
| ການແຕ່ງງານ | | | | | |
| ຄວາມຝັນ | | | | | |
| ເວລາຫວ່າງ | | | | | |

3. **ເວົ້າວ່າ:** ທຸກໆຄົວເຮືອນໃນແຕ່ລະມື້ຕ້ອງໄດ້ມີການຕັດສິນໃຈຫຼາຍຢ່າງ ພວກເຮົາມາສຳຫຼວດນຳກັນເບິ່ງວ່າໃນການຕັດສິນໃຈບາງຢ່າງເຫຼົ່ານີ້ແມ່ນໃຜເປັນຜູ້ຕັດສິນໃຈ ຍ້ອນຫຍັງ?
4. **ຖາມ**ຄຳຖາມຕໍ່ໄປນີ້ ແລະ ໝາຍຕິກໃສ່ຫ້ອງຜູ້ທີ່ຕັດສິນໃຈ
5. **ຖາມ: ແມ່ນໃຜເປັນຜູ້ຕັດສິນໃຈໃນເລື່ອງຕ່າງໆເຫຼົ່ານີ້:**
   - ເລື່ອງການສຶກສາຂອງເຈົ້າ ແລະ ຂອງອ້າຍ, ເອື້ອຍ ນ້ອງຂອງເຈົ້າແມ່ນໃຜເປັນຜູ້ຕັດສິນໃຈ?
   - ເລື່ອງການແຕ່ງດອງຂອງເຈົ້າ ແລະ ອ້າຍ, ເອື້ອຍ ນ້ອງຂອງເຈົ້າແມ່ນໃຜເປັນຜູ້ຕັດສິນໃຈ?
   - ເລື່ອງຄວາມຝັນຂອງເຈົ້າ ແລະ ອ້າຍ, ເອື້ອຍ ນ້ອງຂອງເຈົ້າແມ່ນໃຜເປັນຜູ້ຕັດສິນໃຈ?
   - ການຫຼິ້ນ/ການພັກຜ່ອນ/ເວລາສ້າງສັນສັງຄົມຂອງເຈົ້າ ອ້າຍ, ເອື້ອຍ ນ້ອງຂອງເຈົ້າແມ່ນໃຜເປັນຜູ້ຕັດສິນໃຈ?

6. **ເວົ້າວ່າ** (ເຈົ້າຕ້ອງການເວົ້າແນວໃດກ່ຽວກັບການຕັດສິນໃຈ? ມັນເປັນການໃຫ້ໂອກາດ ແລະ ອິດທິພົນທັງເດັກຍິງ ແລະ ເດັກຊາຍ, ແມ່ ແລະ ພໍ່?)

**ສະຫຼຸບໂດຍຫຍໍ້ກ່ຽວກັບເນື້ອໃນຂອງກິດຈະກຳ**

- ເພດຊາຍມີອິດທິພົນໃນການຕັດສິນໃຈຢູ່ພາຍໃນຄອບຄົວຂອງພວກເຮົາ ຫຼື ອົງການຈັດຕັ້ງຕ່າງໆເປັນປະຈຳ.
- ສິ່ງດັ່ງກ່າວແມ່ນການຈຳແນກບົດບາດຍິງ-ຊາຍ ໂດຍເລີ່ມຈາກການຕັດສິນໃຈໃນຄອບຄົວ ແຕ່ມັນຍັງປະກົດໃຫ້ເຫັນຢູ່ໃນສັງຄົມຢ່າງກວ້າງຂວາງ.
- ມັນຄວນຈະເທົ່າທຽມກັນເວົ້າເຖິງເລື່ອງຜູ້ຊາຍ ແລະ ຜູ້ຍິງໃນການຕັດສິນໃຈໃນຄອບຄົວ ຫຼື ສັງຄົມ.

## ກິດຈະກຳ :5.1 ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ**

**ພາກຂໍ້ມູນຂ່າວສານກ່ຽວກັບກິດຈະກຳ:**

ໃນບົດຮຽນພາກນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າເພື່ອໃຫ້ເຂົ້າໃຈຄວາມໝາຍຂອງຄວາມຮຸນແຮງ, ຮູບແບບຂອງຄວາມຮຸນແຮງ, ບົດບາດ ແລະ ຄວາມຮັບຜິດຊອບຕໍ່ຜົນກະທົບທີ່ຮ້າຍແຮງ ແລະ ວິທີທີ່ເຮົາສາມາດປ້ອງກັນການໃຊ້ຄວາມຮຸນແຮງໃນຊຸມຊົນໂດຍສະເພາະແມ່ນແມ່ຍິງ ແລະ ເດັກຍິງ.

**ຈຸດປະສົງ:**

- ເພື່ອສ້າງຄວາມເຂົ້າໃຈ 'ຄວາມຮຸນແຮງ' ແລະ ຄວາມແຕກຕ່າງຂອງຮູບແບບຄວາມຮຸນແຮງໃນສະພາບການຂອງກຸ່ມໄວໜຸ່ມ.
- ເພື່ອສ້າງຄວາມເຂົ້າໃຈວ່າ ເປັນຫຍັງກຸ່ມໄວໜຸ່ມຈຶ່ງມີຄວາມສ່ຽງທີ່ຈະປະເຊີນກັບຄວາມຮຸນແຮງ.
- ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຜົນກະທົບຂອງຄວາມຮຸນແຮງໃນກຸ່ມໄວໜຸ່ມ.

**ເວລາ:** 15 ນາທີ

**ການກະກຽມອຸປະກອນ:** ເຈ້ຍ, ເຈ້ຍໂປສເຕີ, ສໍ/ບິກເຟີດ

# ເລີ່ມກິດຈະກຳ

1. **ພາກຄຳແນະນຳສຳລັບກິດຈະກຳ. ອ່ານໂດຍໃຊ້ສຽງດັງ**: ໃນບົດຮຽນພາກນີ້ ພວກເຮົາຈະເຂົ້າໃຈກ່ຽວກັບຄວາມຮຸນແຮງ ແລະ ຮູບແບບຄວາມຮຸນແຮງຕ່າງໆ ຈາກນັ້ນ ພວກເຮົາຍັງຈະໄດ້ຮຽນຮູ້ກ່ຽວກັບ ສິ່ງທີ່ພວກເຮົາສາມາດປົກປ້ອງຄວາມຮຸນແຮງດັ່ງກ່າວທີ່ເກີດຂຶ້ນກັບແມ່ຍິງ.
2. **ຂຽນ** ຄຳເວົ້າທີ່ມີ '**ຄວາມຮຸນແຮງ**' ລົງໃນກະດານ ແລະ ແນະນຳຜູ້ເຂົ້າຮ່ວມກິດຈະກຳເວົ້າບາງສິ່ງບາງຢ່າງອອກມາໂດຍໃຊ້ສຽງດັງທີ່ມາກະທົບຈິດໃຈດ້ວຍຄຳເວົ້າຄຳນັ້ນ.
3. **ຂຽນ**ຄຳຕອບອ້ອມຮອບຄຳເວົ້າທີ່ຮຸນແຮງຂອງຜູ້ເຂົ້າຮ່ວມກິດຈະກຳທຸກຂໍ້.
4. ກ່າວຄຳຂອບໃຈນຳຜູ້ເຂົ້າຮ່ວມກິດຈະກຳ ແລະ ຊ່ວຍແນະນຳໃຫ້ກຸ່ມໃຫຍ່ເຂົ້າໃຈຄຳຕອບທີ່ຕ່າງກັນ.

**ຂໍ້ແນະນຳສຳລັບຜູ້ອຳນວຍຄວາມສະດວກ** ບາງຄຳຕອບອາດຈະເປັນການຕີ , ການຕຳ, ການຕົບໜ້າ, ເຜົາໄໝ້ຈາກເຫຼັກຊີ ຫຼື ປາຍກອກຢາ, ໃຫ້ເດັກອຶດອາຫານ, ຂັງໄວ້ໃນບ່ອນມືດ, ການຂ້າ, ການຕໍ່ສູ້, ການຂົ່ມຂືນ, ການກໍ່ຈະລະຈົນ ຫຼື ການຄາດຕະກຳ.

5. **ສະແດງ**ໂປດສເຕີກ່ຽວກັບຄວາມຮຸນແຮງທີ່ກະທົບຕໍ່ແມ່ຍິງ ແລະ ເດັກຍິງຈາກນັ້ນໃຫ້**ຖາມວ່າ:**
   - ແມ່ນຫຍັງທີ່ເປັນຄວາມຮຸງແຮງຕໍ່ແມ່ຍິງ ແລະ ເດັກຍິງ**?**
   - ບາງຕົວຢ່າງກ່ຽວກັບຄວາມຮຸນແຮງຄືຫຍັງ?
   - ມີຄວາມຮຸນແຮງແບບໃດແດ່ຢູ່ທີ່ນັ້ນ?
6. **ເວົ້າວ່າ**ນີ້ແມ່ນໂປດສເຕີຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງ. ສິ່ງທີ່ເຈົ້າເຫັນມັນແມ່ນໂປດສເຕີ 4 ຊະນິດ ໂດຍສະເພາະແມ່ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງເຊັ່ນ: ຄວາມຮຸນແຮງທາງດ້ານຮ່າງກາຍ, ທາງດ້ານຈິດໃຈ, ທາງເພດ ແລະ ທາງເສດຖະກິດ.

1.**ຄວາມຮຸນແຮງທາງດ້ານຮ່າງກາຍ:** ໝາຍເຖິງທຸກໆການກະທຳທີ່ມີຈຸດປະສົງເພື່ອທຳຮ້າຍຮ່າງກາຍຂອງແມ່ຍິງ /ເດັກຍິງເຊັ່ນ: ຕີ, ເຕະ, ຕົບ, ຂ້ຽນ ແລະ ອື່ນໆ.



**2. ຄວາມຮຸນແຮງທາງດ້ານຈິດໃຈ**: ໝາຍເຖິງທຸກໆການກະທຳທີ່ມີຈຸດປະສົງເພື່ອທຳລາຍສະພາບຈິດໃຈຂອງແມ່ຍິງ ແລະ ເດັກຍິງເຊັ່ນ: ການດ່າ, ປ້ອຍ, ເວົ້າເຍີ້ຍສຽດສີ, ເວົ້າປະຊົດເນັບແນມ, ປະຈານ, ວິຈານໃນທາງທີ່ເສຍ, ຂົ່ມຂູ່, ຮ້ອງກະຊາກ, ການນອກໃຈ, ການຫຶງຫວງເກີນຄວນ.




3. **ຄວາມຮຸນແຮງທາງເພດ**: ໝາຍເຖິງການທຳຮ້າຍທີ່ມີລັກສະນະທາງເພດເຊັ່ນ: ການຂົ່ມຂືນ, ການລວນລາມທາງເພດບໍ່ວ່າຈະກະທຳດ້ວຍຮ່າງກາຍ ຫຼື ວາຈາ, ຂະບວນການຄ້າມະນຸດ, ການບັງຄັບໃຫ້ມີເພດສຳພັນບໍ່ວ່າຈະດ້ວຍຮູບແບບໃດກໍຕາມ ຫຼື ຜູ້ກະທຳມີຄວາມສຳພັນແນວໃດກັບຜູ້ຖືກກະທຳກໍຕາມ ຫຼື ຜູ້ກະທຳຈະມີຄວາມສຳແນວໃດກັບຜູ້ຖືກກະທຳ ຫຼື ຈະແມ່ນສະຖານທີ່ໃດກໍ່ຕາມ.



4. **ຄວາມຮຸນແຮງທາງດ້ານເສດຖະກິດ**: ໝາຍເຖິງການເອົາລັດເອົາປຽບທາງດ້ານເສດຖະກິດເຊັ່ນ: ບໍ່ໃຫ້ຄູ່ສົມລົດມີສິດຄຸ້ມຄອງຊັບສົມບັດທີ່ມີ, ບໍ່ໃຫ້ມີສິດໃນການໃຊ້ເງິນຂອງຄອບຄົວ, ບໍ່ໃຫ້ອອກໄປເຮັດວຽກຫາລາຍໄດ້, ບໍ່ປະກອບສ່ວນໃນຄ່າໃຊ້ຈ່າຍໃນຄອບຄົວ, ເມີນເສີຍໃນການສະໜອງປັດໄຈ ຫຼື ຄວາມຕ້ອງການຂັ້ນພື້ນຖານຂອງຄອບຄົວເຊັ່ນ: ອາຫານ ແລະ ເຄື່ອງໃຊ້ສອຍອື່ນໆ, ບໍ່ໃຫ້ໄປປິ່ນປົວສຸຂະພາບອື່ນໆ



**7.** ຫຼັງຈາກ ການສະແດງການອະທິບາຍໂປດສເຕີ **ອະທິບາຍ** ແມ່ນຫຍັງເປັນຄວາມຮຸນແຮງທີ່ມີຜົນສະທ້ອນຕໍ່ແມ່ຍິງ ແລະ ເດັກຍິງ? ໃຫ້ອະທິບາຍ 3-5 ນາທີ:

**ຄວາມຮຸນແຮງ** ສົ່ງຜົນສະທ້ອນບໍ່ສະເພາະແຕ່ຕໍ່ຮ່າງກາຍ ແລະ ຈິດໃຈ ແລະ ເສດຖະກິດຂອງແແມ່ຍິງ/ເດັກຍິງທີ່ຖືກກະທຳເທົ່ານັ້ນ ແຕ່ຄວາມຮຸນແຮງຍັງສ້າງຄວາມເສຍຫາຍຕໍ່ໝົດທຸກຄົນໃນຄອບຄົວ ແລະ ສັງຄົມ ທັງຍັງເຮັດໃຫ້ສູນເສຍຜົນຜະລິດ ແລະ ລາຍໄດ້. ເດັກນ້ອຍທີ່ມີປະສົບການເຫັນແມ່ຕົນເອງຖືກທຳຮ້າຍ ຫຼື ເຫັນຄວາມຮຸນແຮງຢູ່ໃນຄອບຄົວ, ເດັກອາດຈະມີໂອກາດໄດ້ຮັບຄວາມຮຸນແຮງໃນຕໍ່ໜ້າ ແລະ ຍັງໄດ້ຮຽນເອົາເປັນແບບຢ່າງໂດຍບໍ່ຮູ້ສຶກຕົວເຊັ່ນ: ເມື່ອໃຫຍ່ຂຶ້ນມາກໍຍອມຮັບການຖືກກະທຳ ຫຼື ກາຍເປັນຜູ້ກະທຳຄວາມຮຸນແຮງເອງ. ຜູ້ກະທຳຄວາມຮຸນແຮງຕໍ່ຜູ້ອື່ນເປັນຄົນທີ່ມີອາລົມຮ້ອນ, ມີອາການຊຶມເສົ້າສ່ວນຫຼາຍແລ້ວແມ່ນມາຈາກຄອບຄົວທີ່ໃຊ້ຄວາມຮຸນແຮງ ຫຼື ເຫັນການໃຊ້ຄວາມຮຸນແຮງໃນເວລາທີ່ເປັນເດັກນ້ອຍ ແລະ ໃນທີ່ສຸດກໍລ່ວງລະເມີດກົດໝາຍ.

ແມ່ຍິງທີ່ຖືກຄວາມຮຸນແຮງຈະສົ່ງຜົນກະທົບຕໍ່ສຸຂະພາບທາງຮ່າງກາຍ ແລະ ຈິດໃຈ, ຜູ້ຊາຍທີ່ກະທຳຄວາມຮຸນແຮງ: ຂາດຄວາມນັບຖືຈາກໝູ່ເພື່ອນ, ເປັນການທຳລາຍສາຍສຳພັນອັນດີພາຍໃນຄອບຄົວ, ໃນບ່ອນເຮັດວຽກ ແລະ ສັງຄົມ; ເປັນຄົນມີອາລົມຮ້ອນ ແລະ ເປັນຄົນຢູ່ໂດດດ່ຽວ ແລະ ເປັນຜູ້ກະທຳຜິດກົດໝາຍ. ເດັກຂາດໂຮງຮຽນມັກຈະຂາດຄວາມຕັ້ງໃຈອາດຈະໄດ້ຮັບຮອງເອົາຜົນກະທົບໂດຍທົ່ວໄປຂອງການຮຽນຮູ້ຄວາມຮຸນແຮງເຂົ້າໃນການແກ້ໄຂບັນຫາ.

**8.** **ຖາມ**ຄຳຖາມດັ່ງລຸ່ມນີ້ ແລະ ອະທິບາຍກ່ຽວກັບຄວາມຮຸນແຮງ:

- ພວກເຮົາສາມາດເຮັດຫຍັງໄດ້ແດ່ເພື່ອປົກປ້ອງຄວາມຮຸນແຮງຕໍ່ແມ່ຍິງ?
- ຈະມີປະໂຫຍດແນວໃດຕໍ່ເພດຍິງ, ເພດຊາຍ, ເດັກນ້ອຍ, ຄອບຄົວ, ຊຸມຊົນ ແລະ ສັງຄົມ ຖ້າຄວາມຮຸນແຮງຫຼຸດໜ້ອຍລົງ?

ສ້າງລາຍຊື່ຄຳຕອບ ຈາກນັ້ນ ຈັບຄູ່ຄຳຕອບເຫຼົ່ານີ້ ພ້ອມກັບໃຈຄວາມສຳຄັນຈາກຫ້ອງຕາຕະລາງຂ້າງລຸ່ມນີ້ ພ້ອມອ່ານດັງໆ. ເຈົ້າສາມາດແນະນຳຜູ້ເຂົ້າຮ່ວມກິດຈະກຳຄົນໜຶ່ງຂຽນ ແລະ ອ່ານຄຳຕອບ.

## ຂໍ້ມູນສຳຄັນທີ່ຄວນຈຳ

**ອ່ານໂດຍໃຊ້ສຽງດັງ:**

- ແຈ້ງກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງເປັນບາດກ້າວທຳອິດທີ່ສຳຄັນໃນການເວົ້າເຖິງບັນຫາ.
- ຮຽນຮູ້ກ່ຽວກັບບັນຫາທີ່ເກີດຂຶ້ນໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ແລ້ວນຳມາແລກປ່ຽນກັບບຸກຄົນອື່ນໆ.
- ຝຶກພະລັງຂອງຕົນເອງເພື່ອປົກປ້ອງຕົນເອງ ແລະ ຄົນອ້ອມຂ້າງອື່ນໆ.
- ຢ່າລະເວັ້ນຄວາມຮຸນແຮງທຸກຮູບແບບ ແລະ ບໍ່ຄວນເກັບໄວ້ຄົນດຽວໃນເວລາທີ່ເຫັນຜູ້ໃດຜູ້ໜຶ່ງກຳລັງໃຊ້ຄວາມຮຸນແຮງກັບແມ່ຍິງ ເຖິງແມ່ນວ່າ ແມ່ນຍິງຄົນດັ່ງກ່າວບໍ່ແມ່ນຄົນໃນຄອບຄົວຂອງເຈົ້າ.
- ເມື່ອຫຼາຍຄົນມີຄວາມເຂົ້າໃຈຂຶ້ນ ແລະ ປະຕິເສດຄວາມຮຸນແຮງຈະເຮັດໃຫ້ມັນຮຸນແຮງຂຶ້ນໄປເລື້ອຍໆ.
- ຖ້າເຈົ້າຮູ້ຈັກກັບແມ່ຍິງທີ່ກຳລັງປະເຊີນກັບຄວາມຮຸນແຮງໃຫ້ເຂົ້າໄປຫາລາວ. ໃຫ້ລາວຮູ້ວ່າ ເຈົ້າຈະມາຊ່ວຍລາວ ແລະ ເຈົ້າຕຽມພ້ອມທີ່ຈະໃຫ້ການສະໜັບສະໜູນດ້ານຈິດໃຈທີ່ບໍ່ແມ່ນການຕັດສິນບັນຫາ.
- ສິ່ງທີ່ຄວນຈຳ, ນາງຄວນຈະຕັດສິນດ້ວຍຕົນເອງ, ຢ່າພະຍາຍາມບັງຄັບໃຫ້ນາງເຮັດສິ່ງໃດສິ່ງໜຶ່ງທີ່ນາງບໍ່ຕ້ອງການ.
- ພານາງໄປບໍລິການໃນຊຸມຊົນທີ່ສາມາດຊ່ວຍນາງໄດ້. ມີຫຼາຍວິທີທີ່ສາມາດປ້ອງກັນຄວາມຮຸນແຮງ-ນະໂຍບາຍໃນສະຖານທີ່ເຮັດວຽກຕ້ານຄວາມຮຸນແຮງ, ການເຮັດວຽກເພື່ອປ່ຽນແປງມາດຕະຖານສັງຄົມທີ່ອະນຸຍາດໃຫ້ໃຊ້ຄວາມຮຸນແຮງ, ການສິດສອນກ່ຽວກັບເພດຊາຍໄປໃນທາງບວກ-ບໍ່ຄວນຈຸກຈິກຈູ້ຈີ້, ຂົມຂື່ນ ຫຼື ຕົບຕີແມ່ຍິງ, ຕ້ອງແນ່ໃຈວ່າ ແມ່ຍິງຕ້ອງມີທີ່ຢູ່ອາໄສທີ່ປອດໄພ.

ລາຍຊື່ມັນຍາວຫຼາຍ-ເຮົາສາມາດສ້າງມັນດ້ວຍກັນ.

**ໂຄງການ ຮ່ວມມືປັບປຸງດ້ານໂພຊະນາການ ແຂວງ ຫຼວງນໍ້າທາ**

ຈຸດປະສົງລວມຂອງໂຄງການ ແນໃສ່ເພື່ອຄໍ້າປະກັນດ້ານສະບຽງອາຫານ ແລະ ໂພຊະນາການ ໃນຄົວເຮືອນ ຢູ່ໃນເຂດຊົນນະບົດ ແລະ ສ້າງຄວາມອຸດົມສົມບູນດ້ານກະສິກໍາແບບຍືນຍົງ ຢູ່ໃນຂັ້ນຄົວເຮືອນ ແລະ ຂັ້ນບ້ານຢູ່ໃນ ແຂວງ ຫຼວງນໍ້າທາ, ພ້ອມທັງປັບປຸງດ້ານໂພຊະນາການ ຂອງຜູ່ຍິງໄວໜຸ່ມ, ຜູ່ຍິງຖືພາ, ຜູ່ຍິງທີ່ຂາດສານອາຫານ ແລະ ເດັກນ້ອຍ ອາຍຸ ຕໍ່າກວ່າ 5 ປີ ລົງມາ ທີ່ຢູ່ໃນເຂດພື້ນທີ່ເປົ້າໝາຍຂອງໂຄງການ.

**ສະໜັບສະໜູນທຶນໂດຍ: ສະຫະພາບ ເອີຣົບ**

**ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ**

ຖະໜົນໜອງສ້າງທໍ່, ບ້ານໜອງສ້າງທໍ່, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ໄປສະນີ 4328
ໂທ: (856-21) 217 727, 212 991 E-mail: lao.info@careint.org